ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 322/ລບ
ນະຄອນຫຼວງວຽງຈັນ, ວັນທີ 02.09.2022

# ດຳລັດ
# ວ່າດ້ວຍວິສາຫະກິດລັດລົງທຶນ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ໜັງສືສະເໜີຂອງກະຊວງການເງິນ ສະບັບເລກທີ 1556/ກງ, ລົງວັນທີ 01 ມິຖຸນາ 2022.

## ລັດຖະບານ ອອກດຳລັດ:

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການສ້າງຕັ້ງ, ການຄຸ້ມຄອງ, ການເຄື່ອນໄຫວ ແລະ ການຕິດຕາມ ກວດກາວິສາຫະກິດລັດລົງທຶນ ເພື່ອເຮັດໃຫ້ວິສາຫະກິດລັດລົງທຶນດຳເນີນທຸລະກິດຢ່າງມີປະສິດທິຜົນ, ມີຄວາມເຂັ້ມແຂງ ແລະ ສະເໝີພາບຕໍ່ໜ້າກົດໝາຍ ແນໃສ່ຍົກສູງຄວາມຮັບຜິດຊອບ, ຄວາມສາມາດແຂ່ງຂັນ ຕາມກົນໄກເສດຖະກິດຕະຫຼາດ ແລະ ເຕີບໃຫຍ່ຂະຫຍາຍຕົວ ຕາມທິດທັນເປັນອຸດສາຫະກຳ ແລະ ທັນສະໄໝ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

### ມາດຕາ 2 ວິສາຫະກິດລັດລົງທຶນ

ວິສາຫະກິດລັດລົງທຶນ ແມ່ນ ຫົວໜ່ວຍທຸລະກິດ ທີ່ລັດເປັນຜູ້ລົງທຶນສ້າງຕັ້ງແຕ່ພຽງຜູ້ດຽວ ຫຼື ລັດຮ່ວມທຶນກັບພາກສ່ວນອື່ນເພື່ອສ້າງຕັ້ງ ລວມທັງການຊື້ຮຸ້ນຂອງວິສາຫະກິດພາກສ່ວນອື່ນໂດຍລັດ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

1. **ຮຸ້ນ** ໝາຍເຖິງ ທຶນຂອງວິສາຫະກິດລັດລົງທຶນ ທີ່ແບ່ງອອກເປັນສ່ວນ ມີມູນຄ່າເທົ່າກັນ ຫຼື ບໍ່ເທົ່າກັນ ໂດຍຂຶ້ນກັບຮູບແບບຂອງວິສາຫະກິດລັດລົງທຶນ ຊຶ່ງຜູ້ຖືຮຸ້ນ ມີຖານະເປັນເຈົ້າຂອງວິສາຫະກິດລັດລົງທຶນ, ມີສິດ ແລະ ຜົນປະໂຫຍດ ຕາມອັດຕາສ່ວນຮຸ້ນທີ່ຕົນຖື;

2. **ຮຸ້ນສາມັນ** ໝາຍເຖິງ ຮຸ້ນປະເພດໜຶ່ງ ຊຶ່ງຜູ້ເປັນເຈົ້າຂອງຮຸ້ນ ບໍ່ສາມາດຖອນຮຸ້ນໄດ້;

3. **ຮຸ້ນບູລິມະສິດ** ໝາຍເຖິງ ຮຸ້ນປະເພດໜຶ່ງ ຊຶ່ງເຈົ້າຂອງຮຸ້ນ ສາມາດຖອນໄດ້, ເປັນຮຸ້ນທີ່ໄດ້ຮັບບຸລິມະສິດດ້ານເງິນປັນຜົນກ່ອນຮຸ້ນສາມັນ;

4. **ຜູ້ຮ່ວມທຶນ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນຈາກພາກສ່ວນອື່ນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມາຮ່ວມລົງທຶນກັບພາກລັດ ຕາງໜ້າໂດຍກະຊວງການເງິນ ຫຼື ພາກສ່ວນອື່ນ ທີ່ຖືກມອບໝາຍ;

5. **ວິສາຫະກິດພາກສ່ວນອື່ນ** ໝາຍເຖິງ ວິສາຫະກິດທີ່ບໍ່ແມ່ນຂອງລັດ ຊຶ່ງລວມມີວິສາຫະກິດຢູ່ພາຍໃນ ແລະ ຕ່າງປະເທດ;

6. **ລັດວິສາຫະກິດຍຸດທະສາດ (Strategic SOE)** ໝາຍເຖິງ ຫົວໜ່ວຍວິສາຫະກິດຂະໜາດກາງ ແລະ ໃຫຍ່ ທີ່ເປັນເຄື່ອງມືໃນການຄຸ້ມຄອງ ແລະ ດັດສົມເສດຖະກິດ ແລະ ສັງຄົມຂອງກະຊວງ, ອົງການ ຊຶ່ງໃຫ້ແຕ່ລະກະຊວງ, ອົງການ ເປັນຜູ້ກຳນົດວ່າລັດວິສາຫະກິດໃດ ເປັນຫົວໜ່ວຍຍຸດທະສາດຂອງກະຊວງ, ອົງການຕົນ;

7. **ທຸລະກິດຍຸດທະສາດຂອງຂະແໜງການ** ໝາຍເຖິງ ທຸລະກິດທີ່ມີຄວາມສຳຄັນ, ຈຳເປັນ ແລະ ເປັນບຸລິມະສິດ ສຳລັບຮັບໃຊ້ວຽກງານຂອງກະຊວງ, ອົງການຂອງລັດ ຊຶ່ງເປັນເຈົ້າການສ້າງຕັ້ງ ແລະ ຖືຮຸ້ນຫຼາຍກວ່າ ຫ້າສິບສ່ວນຮ້ອຍ;

8. **ສາຂາຂອງລັດວິສາຫະກິດ** ໝາຍເຖິງ ການຈັດຕັ້ງໜຶ່ງຂອງລັດວິສາຫະກິດ ທີ່ເຄື່ອນໄຫວທຸລະກິດຕາມການມອບໝາຍ.

9. **ປະທານສະພາບໍລິຫານ** ແມ່ນບຸກຄົນທີ່ໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຈາກລັດຖະມົນຕີກະຊວງການເງິນ ບົນພື້ນຖານການສະເໜີຂອງຂະແໜງການທີ່ວິສາຫະກິດລັດລົງທຶນຂຶ້ນກັບ, ໃຫ້ເປັນປະທານສະພາບໍລິຫານ ເພື່ອນຳພາ ຊີ້ນຳວຽກງານຄຸ້ມຄອງການດຳເນີນທຸລະກິດຂອງວິສາຫະກິດ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານວິສາຫະກິດລັດລົງທຶນ**

ລັດ ເອົາໃຈໃສ່ ຄຸ້ມຄອງ, ປັບປຸງ ແລະ ພັດທະນາວິສາຫະກິດລັດລົງທຶນ ໃຫ້ມີຄວາມເຂັ້ມແຂງ, ໝັ້ນຄົງ, ມີຄວາມສາມາດແຂ່ງຂັນສູງຂຶ້ນ ຕາມກົນໄກຕະຫຼາດ, ສະເໝີພາບຕໍ່ກົດໝາຍ; ສ້າງເງື່ອນໄຂສະດວກໃນການເຂົ້າເຖິງແຫຼ່ງທຶນ, ສະໜອງຂໍ້ມູນ ຂ່າວສານ ແລະ ສ້າງສະພາບແວດລ້ອມ ໃຫ້ແກ່ວິສາຫະກິດລັດລົງທຶນ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ໃຫ້ຂະຫຍາຍຕົວ.

ລັດ ສົ່ງເສີມ ວິສາຫະກິດລັດລົງທຶນ ໃຫ້ພົວພັນ, ຮ່ວມມືທັງພາຍໃນ ແລະ ສາກົນ ໃນການເຄື່ອນໄຫວທຸລະກິດ ເຊັ່ນ: ລະດົມແຫຼ່ງທຶນ, ຊອກຄູ່ຮ່ວມພັດທະນາ ແລະ ແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ວິທະຍາສາດ, ເຕັກໂນໂລຊີ ແລະ ປະສົບການໃນການບໍລິຫານທຸລະກິດທີ່ດີ, ການບໍລິການເປັນເລີດ, ເປີດກວ້າງຕະຫຼາດ ທັງຍົກສູງຄວາມສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

**ມາດຕາ 5 ຫຼັກການກ່ຽວກັບວຽກງານການຄຸ້ມຄອງວິສາຫະກິດລັດລົງທຶນ**

ວຽກງານການຄຸ້ມຄອງວິສາຫະກິດລັດລົງທຶນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແຕ່ລະໄລຍະ;

2. ປະຕິບັດກົນໄກໄລ່ລຽງທຸລະກິດ, ເປັນເຈົ້າຕົນເອງ ແລະ ຮັບຜິດຊອບຢ່າງເຕັມສ່ວນ ຕໍ່ຊັບສິນ ແລະ ທຶນທີ່ລັດ ມອບໃຫ້;

3. ມີກົນໄກຄຸ້ມຄອງບໍລິຫານ ທີ່ເຂັ້ມແຂງ, ທັນສະໄໝ, ໂປ່ງໃສ, ມີການກວດສອບພາຍໃນ ແລະ ພາຍນອກຢ່າງເປັນປະຈຳ;

4. ປົກປ້ອງສິດຜົນປະໂຫຍດຂອງລັດ, ລວມໝູ່ ແລະ ຜູ້ລົງທຶນ ໃຫ້ມີຄວາມຍຸຕິທຳ, ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ປົກປັກຮັກສາ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ໃຫ້ມີປະສິດທິຜົນ, ປະຢັດຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 6 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ວິສາຫະກິດລັດລົງທຶນ ແລະ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ພົວພັນກັບການສ້າງຕັ້ງ, ການເຄື່ອນໄຫວ ແລະ ການຄຸ້ມຄອງວິສາຫະກິດລັດລົງທຶນ ຢູ່ ສປປ ລາວ ລວມທັງການສ້າງຕັ້ງສາຂາຂອງລັດວິສາຫະກິດຢູ່ຕ່າງປະເທດ.

## ພາກທີ II
## ປະເພດ ແລະ ຮູບແບບຂອງວິສາຫະກິດລັດລົງທຶນ

**ມາດຕາ 7 ປະເພດວິສາຫະກິດລັດລົງທຶນ**

ວິສາຫະກິດລັດລົງທຶນ ມີ ສອງ ປະເພດ ດັ່ງນີ້:

1. ວິສາຫະກິດຂອງລັດ ຫຼື ລັດວິສາຫະກິດ;
2. ວິສາຫະກິດປະສົມ.

ວິສາຫະກິດຂອງລັດ ຫຼື ລັດວິສາຫະກິດ ມີ ສາມ ລັກສະນະ ດັ່ງນີ້:

- ວິສາຫະກິດທີ່ລັດສ້າງຕັ້ງຂຶ້ນ ແລະ ຖືຮຸ້ນ ຮ້ອຍສ່ວນຮ້ອຍ;
- ວິສາຫະກິດທີ່ລັດສ້າງຕັ້ງ ແລະ ຖືຮຸ້ນ ຫຼາຍກວ່າ ຫ້າສິບສ່ວນຮ້ອຍ ຂຶ້ນໄປ ແຕ່ບໍ່ເຖິງຮ້ອຍສ່ວນຮ້ອຍ;
- ວິສາຫະກິດພາກສ່ວນອື່ນ ທີ່ລັດໄດ້ຊື້ຮຸ້ນ ຫຼາຍກວ່າ ຫ້າສິບສ່ວນຮ້ອຍ ຂຶ້ນໄປ ແລະ ໄດ້ຕົກລົງຫັນເປັນວິສາຫະກິດຂອງລັດ.

ວິສາຫະກິດປະສົມ ແມ່ນວິສາຫະກິດທີ່ຮ່ວມທຶນກັນ ລະຫວ່າງລັດ ຫຼື ວິສາຫະກິດຂອງລັດ ກັບພາກສ່ວນອື່ນ ທັງພາຍໃນ ຫຼື ຕ່າງປະເທດ ດັ່ງນີ້:

- ພາກສ່ວນອື່ນຖືຮຸ້ນໃນລັດວິສາຫະກິດ ຊຶ່ງບໍ່ເກີນອັດຕາສ່ວນທຶນ ຕາມທີ່ໄດ້ກຳນົດໄວ້ໃນຂີດໝ້າ 2 ຂໍ້ 1 ຂອງມາດຕານີ້;
- ລັດ ຫຼື ວິສາຫະກິດຂອງລັດ ຖືຮຸ້ນໃນວິສາຫະກິດຂອງພາກສ່ວນອື່ນ ໃນອັດຕາສ່ວນທຶນ ຕາມການຕົກລົງກັນ.

**ມາດຕາ 8 ຮູບແບບຂອງວິສາຫະກິດລັດລົງທຶນ**

ວິສາຫະກິດລັດລົງທຶນ ຕ້ອງຈັດຕັ້ງ ແລະ ເຄື່ອນໄຫວ ຕາມຫຼັກການຂອງຮູບແບບບໍລິສັດ (ບໍລິສັດຈຳກັດ ແລະ ບໍລິສັດມະຫາຊົນ).

ສຳລັບລັດວິສາຫະກິດໃດ ທີ່ຍັງບໍ່ໄດ້ຈັດຕັ້ງ ແລະ ເຄື່ອນໄຫວ ຕາມຫຼັກການຂອງຮູບແບບບໍລິສັດ ໃຫ້ດຳເນີນການປັບປຸງ ແລະ ຫັນເປັນຮູບແບບບໍລິສັດ ຕາມກົດໝາຍວ່າດ້ວຍວິສາຫະກິດ.

## ພາກທີ III
## ລັດວິສາຫະກິດ
### ໝວດທີ 1
### ການສ້າງຕັ້ງລັດວິສາຫະກິດ

**ມາດຕາ 9 ເງື່ອນໄຂການສ້າງຕັ້ງລັດວິສາຫະກິດ**

ການສ້າງຕັ້ງລັດວິສາຫະກິດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ຕ້ອງຢູ່ໃນຂົງເຂດວຽກງານທີ່ມີຄວາມສຳຄັນ ແລະ ຈຳເປັນຂອງຊາດ ຊຶ່ງບໍ່ອະນຸຍາດໃຫ້ພາກສ່ວນເສດຖະກິດອື່ນ ດຳເນີນທຸລະກິດດັ່ງກ່າວໄດ້;

2. ຕ້ອງຢູ່ໃນຂົງເຂດວຽກງານທີ່ຈະຊ່ວຍໃຫ້ລັດ ສາມາດສະໜອງການບໍລິການສາທາລະນະປະໂຫຍດ ໃຫ້ແກ່ສັງຄົມ ໄດ້ຢ່າງກວ້າງຂວາງ ທີ່ພາກສ່ວນເສດຖະກິດອື່ນ ບໍ່ສາມາດດຳເນີນທຸລະກິດດັ່ງກ່າວໄດ້;

3. ຕ້ອງຢູ່ໃນຂົງເຂດວຽກງານ ທີ່ມີຄວາມສາມາດໃນການດຳເນີນທຸລະກິດ ຢ່າງມີປະສິດທິຜົນ, ມີສະຖຽນລະພາບທາງດ້ານເສດຖະກິດ, ການເງິນ ແລະ ສາມາດສ້າງການສະສົມທຶນໄດ້ສູງ;

4. ເປັນທຸລະກິດຍຸດທະສາດຂອງຂະແໜງການ;

5. ມີຜູ້ບໍລິຫານ, ພະນັກງານທີ່ພຽງພໍ ແລະ ເໝາະສົມກັບຂະໜາດຂອງວິສາຫະກິດ, ມີລະດັບວິຊາສະເພາະ ແລະ ປະສົບການທີ່ກ່ຽວຂ້ອງກັບຂະແໜງທຸລະກິດ ທີ່ຈະສ້າງຕັ້ງນັ້ນ;

6. ມີຄວາມພ້ອມທາງດ້ານທຶນ ຕາມເງື່ອນໄຂທຸລະກິດ.

**ມາດຕາ 10 ການສະເໜີສ້າງຕັ້ງລັດວິສາຫະກິດ**

ກະຊວງ, ອົງການໃດ ທີ່ມີຈຸດປະສົງສ້າງຕັ້ງລັດວິສາຫະກິດ ຕ້ອງຍື່ນໜັງສືສະເໜີ ແລະ ເອກະສານປະກອບ ຫາກະຊວງການເງິນ ເພື່ອຄົ້ນຄວ້າ ດັ່ງນີ້:

1. ໜັງສືສະເໜີຂໍສ້າງຕັ້ງລັດວິສາຫະກິດ;
2. ບົດວິພາກເສດຖະກິດ-ເຕັກນິກ;
3. ແຜນການດຳເນີນທຸລະກິດ;
4. ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສຳລັບໂຄງການ ຫຼື ກິດຈະກຳ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ;
5. ແຜນຜັງສ້າງຕັ້ງໂຮງງານ (ຖ້າມີ);
6. ເອກະສານຢັ້ງຢືນແຫຼ່ງທຶນ.

**ມາດຕາ 11 ການພິຈາລະນາສ້າງຕັ້ງລັດວິສາຫະກິດ**

ພາຍຫຼັງໄດ້ຮັບໜັງສືສະເໜີ ແລະ ເອກະສານປະກອບແລ້ວ ກະຊວງການເງິນ ຕ້ອງຄົ້ນຄວ້າການສະເໜີສ້າງຕັ້ງ, ແຫຼ່ງທຶນ ແລະ ປະສິດທິຜົນຂອງການລົງທຶນ ລວມທັງການລົງທຶນຮ່ວມກັບພາກສ່ວນອື່ນ ໃນກໍລະນີລັດບໍ່ຖືຮຸ້ນຮ້ອຍສ່ວນຮ້ອຍ ໂດຍປະສານສົມທົບກັບກະຊວງ, ອົງການທີ່ສະເໜີສ້າງຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງ. ໃນກໍລະນີຈຳເປັນ ກະຊວງການເງິນ ມີສິດທວງໃຫ້ສະໜອງຂໍ້ມູນ ແລະ ເອກະສານເພີ່ມເຕີມ.

ໃນກໍລະນີການສະເໜີສ້າງຕັ້ງ ມີເຫດຜົນ ແລະ ມີຜົນປະໂຫຍດ ໃຫ້ກະຊວງການເງິນ ສະເໜີລັດຖະບານ ເພື່ອພິຈາລະນາເຫັນດີທາງດ້ານຫຼັກການ. ໃນກໍລະນີທີ່ບໍ່ເຫັນດີໃນການສະເໜີສ້າງຕັ້ງ ກໍໃຫ້ແຈ້ງຕອບກະຊວງ, ອົງການທີ່ກ່ຽວຂ້ອງ ພ້ອມດ້ວຍເຫດຜົນ ແລະ ລາຍງານຂັ້ນເທິງ.

**ມາດຕາ 12 ການອະນຸມັດສ້າງຕັ້ງ**

ພາຍຫຼັງໄດ້ຮັບການເຫັນດີທາງດ້ານຫຼັກການແລ້ວ ກະຊວງ, ອົງການທີ່ສະເໜີສ້າງຕັ້ງ ປະສານສົມທົບກັບກະຊວງການເງິນ ເພື່ອຄົ້ນຄວ້າລະອຽດ, ກະກຽມເງື່ອນໄຂ ແລະ ເອກະສານຕ່າງໆໃນການສ້າງຕັ້ງ ເປັນຕົ້ນ ສັນຍາຮ່ວມທຶນ ໃນກໍລະນີບໍ່ແມ່ນລັດຖືຮຸ້ນຮ້ອຍສ່ວນຮ້ອຍ, ກົດລະບຽບຂອງລັດວິສາຫະກິດ, ບຸກຄະລາກອນ ແລ້ວລາຍງານລັດຖະບານ ເພື່ອພິຈາລະນາອະນຸມັດສ້າງຕັ້ງລັດວິສາຫະກິດ.

ໃນກໍລະນີຈຳເປັນກະຊວງການເງິນ ປະສານສົມທົບກັບກະຊວງ, ອົງການທີ່ສະເໜີສ້າງຕັ້ງ ແຕ່ງຕັ້ງຄະນະກຳມະການສ້າງຕັ້ງລັດວິສາຫະກິດ ເພື່ອຄົ້ນຄວ້າລະອຽດ, ກະກຽມເງື່ອນໄຂ ແລະ ເອກະສານຕ່າງໆໃນການສ້າງຕັ້ງ.

**ມາດຕາ 13 ກອງປະຊຸມສ້າງຕັ້ງລັດວິສາຫະກິດ**

ພາຍຫຼັງທີ່ລັດຖະບານ ອະນຸມັດໃຫ້ສ້າງຕັ້ງແລ້ວ ກໍໃຫ້ກະຊວງ, ອົງການທີ່ສະເໜີສ້າງຕັ້ງ ເປັນເຈົ້າການປະສານສົມທົບກັບກະຊວງການເງິນ ຈັດກອງປະຊຸມສ້າງຕັ້ງລັດວິສາຫະກິດ ຊຶ່ງມີຜູ້ເຂົ້າຮ່ວມ ດັ່ງນີ້:

1. ຜູ້ຕາງໜ້າຈາກກະຊວງການເງິນ;

2. ຜູ້ຕາງໜ້າຈາກກະຊວງ, ອົງການທີ່ສະເໜີສ້າງຕັ້ງ;
3. ຜູ້ຕາງໜ້າຈາກພາກສ່ວນທີ່ກ່ຽວຂ້ອງ;
4. ຜູ້ຮ່ວມທຶນ ໃນກໍລະນີບໍ່ແມ່ນລັດຖືຮຸ້ນຮ້ອຍສ່ວນຮ້ອຍ;
5. ຜູ້ຖືກແຕ່ງຕັ້ງ ເປັນສະພາບໍລິຫານ (ຖ້າມີ) ແລະ ຜູ້ອຳນວຍການ.

ກອງປະຊຸມສ້າງຕັ້ງລັດວິສາຫະກິດ ແມ່ນ ຜູ້ຕາງໜ້າຂອງກະຊວງ, ອົງການທີ່ສະເໜີສ້າງຕັ້ງ ຫຼື ກະຊວງການເງິນ ເປັນປະທານ.

ສຳລັບລັດວິສາຫະກິດ ທີ່ລັດຖືຮຸ້ນຮ້ອຍສ່ວນຮ້ອຍ ບໍ່ຈຳເປັນຕ້ອງມີກອງປະຊຸມສ້າງຕັ້ງ ຊຶ່ງໃຫ້ກອງປະຊຸມສະພາບໍລິຫານ ປະຕິບັດໜ້າທີ່ແທນກອງປະຊຸມສ້າງຕັ້ງ.

**ມາດຕາ 14 ສິດ ແລະ ໜ້າທີ່ຂອງກອງປະຊຸມສ້າງຕັ້ງລັດວິສາຫະກິດ**

ກອງປະຊຸມສ້າງຕັ້ງລັດວິສາຫະກິດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຮອງສັນຍາຮ່ວມທຶນ ໃນກໍລະນີບໍ່ແມ່ນລັດຖືຮຸ້ນຮ້ອຍສ່ວນຮ້ອຍ;
2. ຮັບຮອງເອົາກົດລະບຽບຂອງລັດວິສາຫະກິດ;
3. ຕົກລົງ ກ່ຽວກັບຮຸ້ນສາມັນ ແລະ/ຫຼື ຮຸ້ນບຸລິມະສິດ;
4. ປະກາດສ້າງຕັ້ງລັດວິສາຫະກິດ ຢ່າງເປັນທາງການ;
5. ຮັບຮອງ ແລະ ປະກາດຊື່ສະພາບໍລິຫານ (ຖ້າມີ) ແລະ ຜູ້ອຳນວຍການຊຸດທຳອິດ ທີ່ໄດ້ຮັບການແຕ່ງຕັ້ງ;
6. ມອບໝາຍວຽກງານ ໃຫ້ສະພາບໍລິຫານ (ຖ້າມີ) ຫຼື ອຳນວຍການ.

**ມາດຕາ 15 ກອງປະຊຸມຄັ້ງທຳອິດຂອງສະພາບໍລິຫານ**

ສະພາບໍລິຫານ ຕ້ອງເປີດກອງປະຊຸມຄັ້ງທຳອິດຂອງຕົນຂຶ້ນ ພາຍໃນກຳນົດ ສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບການແຕ່ງຕັ້ງ ສຳລັບລັດວິສາຫະກິດຖືຮຸ້ນຮ້ອຍສ່ວນຮ້ອຍ ຫຼື ວັນປິດກອງປະຊຸມສ້າງຕັ້ງລັດວິສາຫະກິດ ສຳລັບລັດວິສາຫະກິດທີ່ມີພາກສ່ວນອື່ນຖືຮຸ້ນນຳ ເປັນຕົ້ນໄປ.

ກອງປະຊຸມຄັ້ງທຳອິດຂອງສະພາບໍລິຫານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເລືອກຕັ້ງປະທານ, ຮອງປະທານ ແລະ ຄະນະກຳມະການຂອງສະພາບໍລິຫານ;
2. ແບ່ງຄວາມຮັບຜິດຊອບ ໃຫ້ກຳມະການສະພາບໍລິຫານ;
3. ປຶກສາຫາລື ແລະ ກຳນົດທິດທາງໃນການດຳເນີນທຸລະກິດ ແລະ ບັນຫາອື່ນ.

ມະຕິຂອງກອງປະຊຸມຄັ້ງທຳອິດຂອງສະພາບໍລິຫານ ຈະມີຄຸນຄ່າໃຊ້ໄດ້ກໍຕໍ່ເມື່ອ ໄດ້ຮັບຄະແນນສຽງເກີນກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາບໍລິຫານ ທີ່ເຂົ້າຮ່ວມກອງປະຊຸມ.

ໃນກໍລະນີວິສາຫະກິດຖືຮຸ້ນຮ້ອຍສ່ວນຮ້ອຍ ກອງປະຊຸມຄັ້ງທຳອິດຂອງສະພາບໍລິຫານ ຍັງມີສິດ ແລະ ໜ້າທີ່ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງດຳລັດສະບັບນີ້.

**ມາດຕາ 16 ການແຈ້ງຂຶ້ນທະບຽນວິສາຫະກິດ**

ພາຍຫຼັງກອງປະຊຸມສ້າງຕັ້ງ ຫຼື ສະພາບໍລິຫານລັດວິສາຫະກິດ ມີມະຕິຮັບຮອງການສ້າງຕັ້ງແລ້ວ ກະຊວງ, ອົງການທີ່ສະເໜີສ້າງຕັ້ງ ຕ້ອງປະກອບເອກະສານ ສະເໜີແຈ້ງຂຶ້ນທະບຽນວິສາຫະກິດ ນຳກະຊວງອຸດສາຫະກຳ ແລະ ການຄ້າ.

ເອກະສານປະກອບການແຈ້ງຂຶ້ນທະບຽນວິສາຫະກິດ ມີ ດັ່ງນີ້:

1. ຄຳຮ້ອງຂໍຂຶ້ນທະບຽນວິສາຫະກິດ ຕາມແບບພິມ;
2. ໜັງສືອະນຸມັດໃຫ້ສ້າງຕັ້ງລັດວິສາຫະກິດຈາກລັດຖະບານ;
3. ເອກະສານຢັ້ງຢືນຈາກກະຊວງການເງິນ;
4. ມະຕິຂອງກອງປະຊຸມສ້າງຕັ້ງ ຫຼື ສະພາບໍລິຫານລັດວິສາຫະກິດ;

5. ສັນຍາຮ່ວມທຶນ ໃນກໍລະນີບໍ່ແມ່ນລັດຖືຮຸ້ນຮ້ອຍສ່ວນຮ້ອຍ;

6. ກົດລະບຽບຂອງລັດວິສາຫະກິດ;

7. ສຳເນົາບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວຂອງສະມາຊິກສະພາບໍລິຫານ, ຜູ້ອຳນວຍການລັດວິສາຫະກິດ.

ພາຍຫຼັງຂຶ້ນທະບຽນວິສາຫະກິດແລ້ວ ຕ້ອງຂໍອະນຸຍາດດຳເນີນກິດຈະການ ຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ ເວັ້ນເສຍແຕ່ເປັນກິດຈະການ ທີ່ບໍ່ຈຳເປັນຂໍອະນຸຍາດດຳເນີນທຸລະກິດ.

ສຳລັບກິດຈະການປະກັນໄພ ແລະ ທະນາຄານ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 17 ການປະກອບທຶນໃນການສ້າງຕັ້ງ**

ການປະກອບທຶນ ຈະເປັນເງິນສົດ ແລະ/ຫຼື ເປັນວັດຖຸກໍໄດ້. ສຳລັບການປະກອບທຶນຂອງພາກລັດ ອາດມາຈາກແຫຼ່ງທຶນ ດັ່ງນີ້:

1. ງົບປະມານຂອງລັດ;
2. ການຫັນຊັບສິນຂອງລັດເປັນທຶນ ຫຼື ໜີ້ສິນຂອງພາກສ່ວນອື່ນຕໍ່ລັດ ມາເປັນທຶນ;
3. ການຄ້ຳປະກັນຂອງລັດ ດ້ວຍສັນຍາ ຫຼື ໂຄງການ;
4. ການກູ້ຢືມ, ການຊ່ວຍເຫຼືອລ້າ ຈາກພາຍໃນ ແລະ ຕ່າງປະເທດ;
5. ແຫຼ່ງອື່ນ ຕາມການຕົກລົງຂອງລັດຖະບານ.

ການປະກອບທຶນສ້າງຕັ້ງລັດວິສາຫະກິດ ໃຫ້ປະຕິບັດກ່ອນການຂຶ້ນທະບຽນວິສາຫະກິດ ດັ່ງນີ້:

1. ປະກອບທຶນເປັນວັດຖຸ ຕ້ອງໃຫ້ຄົບຮ້ອຍສ່ວນຮ້ອຍ;

2. ປະກອບທຶນເປັນເງິນສົດ ຢ່າງໜ້ອຍ ເຈັດສິບສ່ວນຮ້ອຍ, ສ່ວນທີ່ຍັງເຫຼືອນັ້ນ ໃຫ້ຜູ້ອຳນວຍການ ຮຽກປະກອບຕື່ມເວລາໃດກໍໄດ້ ພາຍຫຼັງໄດ້ຂຶ້ນທະບຽນວິສາຫະກິດ ເວັ້ນເສຍແຕ່ສັນຍາຮ່ວມທຶນ ຫຼື ກົດລະບຽບຂອງລັດວິສາຫະກິດ ໄດ້ກຳນົດໄວ້ຢ່າງອື່ນ.

**ມາດຕາ 18 ການສ້າງຕັ້ງສາຂາລັດວິສາຫະກິດ**

ລັດວິສາຫະກິດ ທີ່ມີຈຸດປະສົງສ້າງຕັ້ງສາຂາ ຢູ່ພາຍໃນ ຫຼື ຕ່າງປະເທດ ຕ້ອງສະເໜີຫາກະຊວງການເງິນພິຈາລະນາ ຕາມເງື່ອນໄຂ ດັ່ງນີ້:

1. ມີມະຕິຂອງກອງປະຊຸມຜູ້ຖືຮຸ້ນ ຫຼື ສະພາບໍລິຫານ ຕົກລົງໃຫ້ສ້າງຕັ້ງ;

2. ມີທຶນພຽງພໍ;

3. ມີລະບົບຄຸ້ມຄອງບໍລິຫານທີ່ເຂັ້ມແຂງ ແລະ ບຸກຄະລາກອນ ທີ່ມີຄວາມຮູ້ຄວາມສາມາດ ແລະ ມີຈຳນວນທີ່ເໝາະສົມ;

4. ມີທີ່ຕັ້ງສຳນັກງານ ແລະ ວັດຖຸປະກອບທີ່ເໝາະສົມ.

ສຳລັບການສ້າງຕັ້ງສາຂາຂອງລັດວິສາຫະກິດ ທີ່ດຳເນີນທຸລະກິດປະກັນໄພ ຫຼື ທະນາຄານ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ.

ພາຍຫຼັງໄດ້ຮັບການສະເໜີສ້າງຕັ້ງສາຂາລັດວິສາຫະກິດແລ້ວ ກະຊວງການເງິນ ຕ້ອງຄົ້ນຄວ້າອະນຸມັດ ຫຼື ປະຕິເສດການສ້າງຕັ້ງ ພາຍໃນເວລາ ສາມສິບວັນ. ຖ້າມີຄວາມຈຳເປັນກະຊວງການເງິນ ສາມາດຮຽກຮ້ອງໃຫ້ລັດວິສາຫະກິດສະໜອງຂໍ້ມູນເພີ່ມເຕີມ.

## ໝວດທີ 2
## ໂຄງປະກອບການຈັດຕັ້ງຂອງລັດວິສາຫະກິດ

**ມາດຕາ 19 ໂຄງປະກອບການຈັດຕັ້ງຂອງລັດວິສາຫະກິດ**

ໂຄງປະກອບການຈັດຕັ້ງຂອງລັດວິສາຫະກິດ ປະກອບດ້ວຍ:

1. ກອງປະຊຸມຜູ້ຖືຮຸ້ນ ຍົກເວັ້ນລັດວິສາຫະກິດ ທີ່ລັດຖືຮຸ້ນຮ້ອຍສ່ວນຮ້ອຍ;
2. ສະພາບໍລິຫານ;
3. ຄະນະຜູ້ອຳນວຍການ;
4. ພະແນກ ຫຼື ໜ່ວຍງານ.

ລັດວິສາຫະກິດ ອາດມີໂຄງປະກອບການຈັດຕັ້ງອື່ນເພີ່ມເຕີມ ຕາມຂະໜາດຂອງວິສາຫະກິດ ຫຼື ຈຸດພິເສດຂອງທຸລະກິດ ຊຶ່ງຕ້ອງໄດ້ກຳນົດໄວ້ໃນກົດລະບຽບຂອງລັດວິສາຫະກິດ.

**ມາດຕາ 20 ກອງປະຊຸມຜູ້ຖືຮຸ້ນ**

ກອງປະຊຸມຜູ້ຖືຮຸ້ນຂອງລັດວິສາຫະກິດ ແມ່ນ ການຈັດຕັ້ງສູງສຸດຂອງວິສາຫະກິດ ຊຶ່ງປະກອບມີ ຜູ້ຕາງໜ້າຜູ້ຖືຮຸ້ນຂອງລັດ ແລະ ຜູ້ຖືຮຸ້ນຈາກພາກສ່ວນອື່ນ.

ກອງປະຊຸມຜູ້ຖືຮຸ້ນຂອງລັດວິສາຫະກິດ ປະກອບມີ ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ. ກອງປະຊຸມສາມັນ ເປີດຂຶ້ນຢ່າງໜ້ອຍ ໜຶ່ງຄັ້ງຕໍ່ປີ ຕາມກົດລະບຽບຂອງລັດວິສາຫະກິດ. ກອງປະຊຸມວິສາມັນ ສາມາດເປີດຂຶ້ນເວລາໃດກໍໄດ້ ໃນກໍລະນີມີຄວາມຈຳເປັນ.

ຜູ້ຕາງໜ້າຜູ້ຖືຮຸ້ນຂອງລັດ ແມ່ນ ຜູ້ຕາງໜ້າຈາກກະຊວງການເງິນ ຫຼື ກະຊວງ, ອົງການທີ່ສະເໜີສ້າງຕັ້ງ ທີ່ໄດ້ຮັບການແຕ່ງຕັ້ງຈາກລັດຖະມົນຕີກະຊວງການເງິນ.

**ມາດຕາ 21 ສິດ ແລະ ໜ້າທີ່ຂອງກອງປະຊຸມຜູ້ຖືຮຸ້ນ**

ກອງປະຊຸມຜູ້ຖືຮຸ້ນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາຮັບຮອງ ຫຼື ປັບປຸງ ສັນຍາຮ່ວມທຶນ ຫຼື ກົດລະບຽບຂອງລັດວິສາຫະກິດ;
2. ພິຈາລະນາຮັບຮອງເອົາບົດສະຫຼຸບລາຍງານ ກ່ຽວກັບຜົນການດຳເນີນທຸລະກິດ, ບົດລາຍງານການເງິນ ແລະ ບົດລາຍງານຜົນການກວດສອບປະຈຳປີ;
3. ພິຈາລະນາຮັບຮອງເອົາ ແຜນຍຸດທະສາດ, ແຜນການດຳເນີນທຸລະກິດ, ແຜນງົບປະມານ ແລະ ແຜນການລົງທຶນປະຈຳປີ ພ້ອມທັງຮັບຮອງເອົາວິທີການແບ່ງປັນເງິນປັນຜົນທ້າຍປີ;
4. ພິຈາລະນາຮັບຮອງເອົາ ແຜນການເພີ່ມ ຫຼື ຫຼຸດທຶນ, ການຄວບ, ການສ້າງຕັ້ງ, ການຍຸບເລີກ ລັດວິສາຫະກິດ ແລະ ສາຂາຂອງລັດວິສາຫະກິດ;
5. ພິຈາລະນາຮັບຮອງເອົາ ການຊື້, ຂາຍ, ໂອນຮຸ້ນ ຫຼື ກິດຈະການທັງໝົດ ຫຼື ບາງສ່ວນ, ກຳນົດການປະກອບທຶນ ແລະ ອັດຕາສ່ວນທາງການເງິນທີ່ສຳຄັນ;
6. ພິຈາລະນາຮັບຮອງເອົາແຫຼ່ງທຶນ ເພື່ອຂະຫຍາຍທຸລະກິດ ຕາມການສະເໜີຂອງສະພາບໍລິຫານ;
7. ພິຈາລະນາຮັບຮອງ ແຜນເບີກຈ່າຍບຳເນັດປະຈຳປີ, ເບ້ຍປະຊຸມ, ເງິນເດືອນຂອງສະພາບໍລິຫານ ສຳລັບຜູ້ປະຈຳການ, ຄະນະອຳນວຍການ, ຄ່າຈ້າງຜູ້ກວດສອບບັນຊີ, ເງິນໃຊ້ຈ່າຍບໍລິຫານ, ເງິນເດືອນ, ເງິນອຸດໜູນ ແລະ ນະໂຍບາຍພະນັກງານຂອງລັດວິສາຫະກິດ ຕາມການສະເໜີຂອງສະພາບໍລິຫານ;
8. ຮັບຮອງ ການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ສະພາບໍລິຫານ ແລະ ຄະນະອຳນວຍການ ພາຍຫຼັງໄດ້ຮັບການແຕ່ງຕັ້ງຈາກລັດຖະມົນຕີກະຊວງການເງິນ;
9. ຮັບຮອງການວ່າຈ້າງ ຜູ້ກວດສອບບັນຊີ ແລະ ຜູ້ຊ່ຽວຊານ ເພື່ອຊ່ວຍໃຫ້ຄຳປຶກສາແນະນຳດ້ານຕ່າງໆ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 22 ສະພາບໍລິຫານ**

ສະພາບໍລິຫານ ເປັນຕົວແທນໃຫ້ແກ່ຜູ້ຖືຮຸ້ນໃນການຄຸ້ມຄອງລັດວິສາຫະກິດ ຊຶ່ງປະກອບດ້ວຍ ສະມາຊິກ ແຕ່ ຫ້າຄົນ ຂຶ້ນໄປ ໃນນັ້ນມີ ປະທານ, ຮອງປະທານ ແລະ ກຳມະການຈຳນວນໜຶ່ງ ທີ່ຖືກຮັບຮອງການແຕ່ງຕັ້ງ ຫຼື ປົດຕຳ ແໜ່ງ ໂດຍກອງປະຊຸມຜູ້ຖືຮຸ້ນ. ປະທານສະພາບໍລິຫານ ແລະ ກຳມະການສະພາບໍລິຫານໃດໜຶ່ງ ສາມາດປະຈຳການ ຕາມ ການຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ ເພື່ອຊີ້ນຳ, ຕິດຕາມ ກວດກາ ແລະ ເຂົ້າຮ່ວມການຈັດຕັ້ງປະຕິບັດວຽກງານປະຈຳ ວັນຂອງລັດວິສາຫະກິດ.

ສະພາບໍລິຫານຂອງລັດວິສາຫະກິດ ທີ່ລັດຖືຮຸ້ນຮ້ອຍສ່ວນຮ້ອຍ ເປັນການຈັດຕັ້ງສູງສຸດຂອງລັດວິສາຫະກິດ ແລະ ໄດ້ຮັບການແຕ່ງຕັ້ງຈາກກະຊວງການເງິນ ບົນພື້ນຖານການປະສານສົມທົບກັບກະຊວງ, ອົງການທີ່ສະເໜີຂໍສ້າງຕັ້ງ. ສະພາບໍລິຫານ ນອກຈາກປະຕິບັດສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງດຳລັດສະບັບນີ້, ຍັງປະຕິ ບັດພາລະບົດບາດ, ສິດ ແລະ ໜ້າທີ່ ຄືກັບກອງປະຊຸມຜູ້ຖືຮຸ້ນ.

ລັດວິສາຫະກິດໃດໜຶ່ງ ສາມາດມີກຳມະການສະພາບໍລິຫານທີ່ມາຈາກພາຍນອກ ຊຶ່ງມີ ຄວາມຊ່ຽວຊານ, ຊຳ ນານງານໃນວຽກງານໃດໜຶ່ງ ຕາມການຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ.

ສະພາບໍລິຫານ ມີ ອາຍຸການ ສາມປີ ແລະ ສາມາດເລືອກຕັ້ງຄືນໃໝ່ໄດ້ ຕາມຜົນການດຳເນີນທຸລະກິດ ແລະ ການປະເມີນຜົນການປະຕິບັດໜ້າທີ່ວຽກງານຂອງຜູ້ກ່ຽວ ແຕ່ບໍ່ເກີນ ສອງ ສະໄໝຕິດຕໍ່ກັນ ຫຼື ໃຫ້ປະຕິບັດຕາມກົດໝາຍ ທີ່ກ່ຽວຂ້ອງ.

ສະມາຊິກສະພາບໍລິຫານ ຈະໄດ້ຮັບເງິນເບັ້ຍປະຊຸມ, ເງິນບຳເນັດປະຈຳປີ ແລະ ນະໂຍບາຍອື່ນ ຕາມການ ຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ ຫຼື ກົດລະບຽບຂອງລັດວິສາຫະກິດ. ສຳລັບສະມາຊິກສະພາບໍລິຫານທີ່ປະຈຳການ ຍັງ ຈະໄດ້ຮັບເງິນເດືອນຕື່ມອີກ.

**ມາດຕາ 23 ມາດຕະຖານ ແລະ ເງື່ອນໄຂຂອງສະມາຊິກສະພາບໍລິຫານຈາກຝ່າຍລັດ**

ສະມາຊິກສະພາບໍລິຫານຈາກຝ່າຍລັດ ໄດ້ຮັບການແຕ່ງຕັ້ງຈາກກະຊວງການເງິນ ຊຶ່ງມີ ມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ເປັນບຸກຄົນທີ່ມີຄວາມຮູ້,ຄວາມສາມາດ ແລະ ປະສົບການ ໃນການຄຸ້ມຄອງບໍລິຫານທຸລະກິດ ຫຼື ຂົງເຂດວຽກງານທີ່ກ່ຽວຂ້ອງ ຢ່າງໜ້ອຍ ສາມປີ ຂຶ້ນໄປ ແລະ ມີປະຫວັດການບໍລິຫານທີ່ດີ. ສຳລັບປະທານສະພາ ບໍລິຫານ ຕ້ອງມີປະສົບການໃນການເປັນຜູ້ບໍລິຫານອົງການໃດໜຶ່ງ ຢ່າງໜ້ອຍ ສາມປີ ຂຶ້ນໄປ;

2. ປະທານສະພາບໍລິຫານ ຕ້ອງມີຕຳແໜ່ງບໍລິຫານປະເພດ ສາມ ຂຶ້ນໄປ. ສຳລັບຮອງປະທານ ແລະ ກຳ ມະການສະພາບໍລິຫານ ມີຕຳແໜ່ງບໍລິຫານປະເພດ ຫ້າ ຂຶ້ນໄປ;

3. ມີລະດັບການສຶກສາດ້ານ ກົດໝາຍ, ກວດສອບ, ການເງິນ, ການບັນຊີ, ການບໍລິຫານບຸກຄະລາກອນ, ການຕະຫຼາດ ຫຼື ການລົງທຶນ ຊັ້ນປະລິນຍາຕີ ຂຶ້ນໄປ;

4. ມີຄວາມສັດຊື່, ຄຸນສົມບັດດີ, ວິໄສທັດ, ຈັນຍາບັນ, ຈັນຍາທຳ, ຄວາມຄິດສ້າງສັນ, ໂປ່ງໃສ ແລະ ພາວະໃນການເປັນຜູ້ນຳ;

5. ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບ ໃນສະຖານການກະທຳຜິດໂດຍເຈດຕະນາ ຫຼື ຖືກລົງ ໂທດຫ້າມດຳເນີນທຸລະກິດ;

6. ມີສຸຂະພາບດີ.

**ມາດຕາ 24 ສິດ ແລະ ໜ້າທີ່ຂອງສະພາບໍລິຫານ**

ສະພາບໍລິຫານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແຜນຍຸດທະສາດ, ທິດທາງ, ນະໂຍບາຍ, ແຜນດຳເນີນທຸລະກິດ ປະຈຳປີ, ຫ້າປີ; ຄົ້ນຄວ້າປັບປຸງ ກົດລະບຽບຂອງລັດວິສາຫະກິດ ລວມທັງວິທີການແບ່ງເງິນປັນຜົນ ເພື່ອສະເໜີກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ;

2. ຄົ້ນຄວ້າການສ້າງຕັ້ງສາຂາຂອງລັດວິສາຫະກິດ ເພື່ອສະເໜີກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ;

3. ພິຈາລະນາ ບົດລາຍງານການເງິນ ປະຈຳປີ, ຫ້າປີ, ງົບປະມານປະຈຳປີ ແລະ ບົດລາຍງານການກວດສອບປະຈຳປີ ເພື່ອສະເໜີກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ;

4. ທົບທວນ ແລະ ປະເມີນ ກ່ຽວກັບຜົນການດຳເນີນທຸລະກິດ ໃນແຕ່ລະໄລຍະ ບົນພື້ນຖານຄາດໝາຍ ແລະ ແຜນການທີ່ໄດ້ກຳນົດໄວ້;

5. ຕິດຕາມ ກວດກາ ການປະຕິບັດໜ້າທີ່ວຽກງານຂອງຄະນະອຳນວຍການລັດວິສາຫະກິດ ຕາມຫຼັກການບໍລິຫານກິດຈະການທີ່ດີ ແລະ ຕາມສະພາບຄວາມເປັນຈິງ;

6. ທົບທວນ ແລະ ຮັບຮອງເອົາຜັງບັນຊີ ແລະ ລະບົບການຖືບັນຊີ;

7. ຄົ້ນຄວ້າກຳນົດ ບໍາເນັດປະຈຳປີ, ເບັ້ຍປະຊຸມ, ເງິນເດືອນຂອງຄະນະອຳນວຍການ, ຄ່າຈ້າງຜູ້ກວດສອບບັນຊີ, ເງິນໃຊ້ຈ່າຍບໍລິຫານ, ເງິນເດືອນ, ເງິນອຸດໜູນ ແລະ ນະໂຍບາຍພະນັກງານຂອງລັດວິສາຫະກິດ ເພື່ອສະເໜີກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ;

8. ຄົ້ນຄວ້າຄັດເລືອກຄະນະອຳນວຍການ ເພື່ອສະເໜີລັດຖະມົນຕີກະຊວງການເງິນ ພິຈາລະນາແຕ່ງຕັ້ງ;

9. ຄົ້ນຄວ້າຄັດເລືອກ ຜູ້ກວດສອບບັນຊີ ແລະ ຜູ້ຊ່ຽວຊານ ເພື່ອຊ່ວຍໃຫ້ຄຳປຶກສາແນະນຳດ້ານຕ່າງໆ ເພື່ອສະເໜີກອງປະຊຸມຜູ້ຖືຮຸ້ນຮັບຮອງ;

10. ຮັບຮອງການປະເມີນ, ຍ້ອງຍໍ ຫຼື ປະຕິບັດວິໄນຕໍ່ຄະນະອຳນວຍການ, ພະນັກງານຂອງລັດວິສາຫະກິດ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດລະບຽບຂອງລັດວິສາຫະກິດ ແລະ ຕາມການມອບໝາຍ.

**ມາດຕາ 25 ການປ່ຽນແທນສະມາຊິກສະພາບໍລິຫານ**

ເມື່ອສະມາຊິກສະພາບໍລິຫານໃດໜຶ່ງ ຫາກຖືກປົດຕຳແໜ່ງ, ຍົກຍ້າຍ, ເຂົ້າຮັບບຳນານ ຫຼື ເສຍຊີວິດ ໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາຮັບຮອງ ການແຕ່ງຕັ້ງສະມາຊິກສະພາບໍລິຫານຜູ້ໃໝ່ປ່ຽນແທນ ເພື່ອປະຕິບັດໜ້າທີ່ຕາມອາຍຸການສະພາບໍລິຫານທີ່ຍັງເຫຼືອ.

**ມາດຕາ 26 ຄະນະອຳນວຍການ**

ຄະນະອຳນວຍການ ເປັນຜູ້ຄຸ້ມຄອງບໍລິຫານ ການເຄື່ອນໄຫວທຸລະກິດປະຈຳວັນຂອງລັດວິສາຫະກິດ ຊຶ່ງປະກອບດ້ວຍ ຜູ້ອຳນວຍການ ແລະ ຮອງຜູ້ອຳນວຍການ ຈຳນວນໜຶ່ງ.

ຄະນະອຳນວຍການຂອງລັດວິສາຫະກິດ ໄດ້ຮັບເງິນເດືອນ ແລະ ເງິນນະໂຍບາຍຕ່າງໆ ຕາມການຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ ແລະ ຕາມສັນຍາແຮງງານ.

ຄະນະອຳນວຍການ ເຄື່ອນໄຫວວຽກງານໃນຂອບເຂດສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້, ກົດລະບຽບຂອງລັດວິສາຫະກິດ, ແຕ່ຢູ່ພາຍໃຕ້ການຄຸ້ມຄອງຂອງສະພາບໍລິຫານ ແລະ ກອງປະຊຸມຜູ້ຖືຮຸ້ນ.

ຄະນະອຳນວຍການ ມີ ອາຍຸການ ສາມປີ ແລະ ສາມາດແຕ່ງຕັ້ງຄືນໃໝ່ໄດ້ ຕາມຜົນການດຳເນີນທຸລະກິດ ແລະ ການປະເມີນຜົນການປະຕິບັດໜ້າທີ່ວຽກງານຂອງຜູ້ກ່ຽວ ແຕ່ບໍ່ເກີນ ສອງ ສະໄໝຕິດຕໍ່ກັນ ຫຼື ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ. ສຳລັບອາຍຸການຂອງຄະນະອຳນວຍການໃດໜຶ່ງ ທີ່ຖືກແຕ່ງຕັ້ງປ່ຽນແທນ ແມ່ນເທົ່າກັບອາຍຸການທີ່ຍັງເຫຼືອຂອງຄະນະອຳນວຍການນັ້ນ.

**ມາດຕາ 27 ມາດຕະຖານ ແລະ ເງື່ອນໄຂຂອງຄະນະອຳນວຍການຈາກຝ່າຍລັດ**

ບຸກຄົນທີ່ຖືກແຕ່ງຕັ້ງເປັນຄະນະອຳນວຍການຈາກຝ່າຍລັດ ມີ ມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ເປັນນັກບໍລິຫານທຸລະກິດທີ່ດີ ແລະ ມີປະສົບການໃນການບໍລິຫານທຸລະກິດ ຢ່າງໜ້ອຍ ຫ້າປີ;

2. ມີຄວາມຮູ້ ຄວາມສາມາດ ແລະ ລະດັບການສຶກສາດ້ານ ກົດໝາຍ, ກວດສອບ, ການເງິນ, ການບັນຊີ, ການບໍລິຫານບຸກຄະລາກອນ, ການຕະຫຼາດ ຫຼື ການລົງທຶນ ຊັ້ນປະລິນຍາຕີ ຂຶ້ນໄປ;

3. ມີຄວາມສັດຊື່, ມີຄຸນສົມບັດດີ ແລະ ມີຄວາມຮັບຜິດຊອບຕໍ່ໜ້າທີ່;

4. ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບ ໃນສະຖານການກະທຳຜິດໂດຍເຈດຕະນາ ຫຼື ຖືກລົງໂທດຫ້າມດຳເນີນທຸລະກິດ;

5. ແຈ້ງຊັບສິນຂອງຕົນ ກ່ອນການເຂົ້າຮັບຕຳແໜ່ງ;

6. ມີສຸຂະພາບດີ.

**ມາດຕາ 28 ສິດ ແລະ ໜ້າທີ່ຂອງຄະນະອຳນວຍການ**

ຄະນະອຳນວຍການລັດວິສາຫະກິດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງ, ປັບປຸງ ແລະ ສະເໜີດັດແກ້ ແຜນການດຳເນີນທຸລະກິດ, ການຄຸ້ມຄອງບໍລິຫານ ແລະ ແຜນບຳລຸງສ້າງບຸກຄະລາກອນປະຈຳປີ ເພື່ອນຳສະເໜີສະພາບໍລິຫານ ພິຈາລະນາ;

2. ຄົ້ນຄວ້າສ້າງ, ປັບປຸງສັນຍາຮ່ວມທຶນລັດວິສາຫະກິດ;

3. ສ້າງແຜນ ການລົງທຶນປະຈຳປີ, ການເພີ່ມ ຫຼື ຫຼຸດທຶນ, ການຄວບ, ການສ້າງຕັ້ງ, ການຍຸບເລີກ ລັດວິສາຫະກິດ, ສາຂາລັດວິສາຫະກິດ, ການຊື້-ຂາຍ, ໂອນຮຸ້ນ ຫຼື ກິດຈະການ ທັງໝົດ ຫຼື ບາງສ່ວນ, ກຳນົດການປະກອບທຶນ ແລະ ອັດຕາສ່ວນທາງການເງິນທີ່ສຳຄັນ ເພື່ອສະເໜີໃຫ້ສະພາບໍລິຫານ ພິຈາລະນາ;

4. ບໍລິຫານວຽກງານປະຈຳວັນຂອງລັດວິສາຫະກິດ;

5. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດແຜນລາຍຮັບ-ລາຍຈ່າຍປະຈຳປີ ລວມທັງການເບີກຈ່າຍເງິນບໍລິຫານ, ເງິນບຳເນັດ, ເງິນເດືອນ, ເງິນແຮງງານ, ເງິນອຸດໜູນ, ເງິນນະໂຍບາຍ ແລະ ບັນດາຄັງຕ່າງໆ ຕາມກົດໝາຍ ແລະ ຕາມການຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ;

6. ເປັນຕົວແທນລັດວິສາຫະກິດ ໃນການລົງລາຍເຊັນໃສ່ເອກະສານຂອງລັດວິສາຫະກິດ ເຊັ່ນ ການເຮັດສັນຍາຊື້-ຂາຍ, ສັນຍາເຊົ່າ ແລະ ເອກະສານທາງລັດຖະການ;

7. ອອກຂໍ້ຕົກລົງ ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຫົວໜ້າ, ຮອງຫົວໜ້າ ພະແນກການ, ໜ່ວຍງານ, ສາຂາ, ຫ້ອງການຜູ້ຕາງໜ້າ ແລະ ຕຳແໜ່ງອື່ນ ທີ່ມີຄວາມສຳຄັນ ລວມທັງບັນຈຸ, ສັບຊ້ອນ ແລະ ປົດປະຈຳການພະນັກງານພາຍໃນລັດວິສາຫະກິດ;

8. ຢັ້ງຢືນ, ສະໜອງຂໍ້ມູນ ແລະ ເອກະສານ ໃຫ້ຜູ້ກວດສອບພາຍໃນ ແລະ ພາຍນອກ ຢ່າງຖືກຕ້ອງ, ທັນເວລາ ແລະ ເຜີຍແຜ່ບັນດາບົດລາຍງານການເງິນ ທີ່ໄດ້ຜ່ານການກວດສອບ ຕາມກົດໝາຍ ແລະ ລະບຽບການ;

9. ປັບປຸງແກ້ໄຂຂໍ້ຄົງຄ້າງ ຕາມການແນະນຳຂອງຜູ້ກວດສອບພາຍໃນ ແລະ ພາຍນອກ;

10. ສ້າງ ແລະ ປັບປຸງລະບຽບການ ກ່ຽວກັບການຄຸ້ມຄອງບໍລິຫານລັດວິສາຫະກິດ ເພື່ອສະເໜີຕໍ່ສະພາບໍລິຫານ ຮັບຮອງ;

11. ແບ່ງປັນເງິນປັນຜົນ ຕາມການຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ;

12. ໄດ້ຄ່າຕອບແທນໃນຮູບແບບ ເງິນເດືອນ, ເບ້ຍປະຊຸມ ແລະ ນະໂຍບາຍອື່ນ ຕາມກົດລະບຽບຂອງວິສາຫະກິດ ຫຼື ຕາມສັນຍາແຮງງານ;

13. ປະເມີນ, ຍ້ອງຍໍ ແລະ ປະຕິບັດວິໄນຕໍ່ພະນັກງານຂອງລັດວິສາຫະກິດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງກອງປະຊຸມຜູ້ຖືຮຸ້ນ ຫຼື ສະພາບໍລິຫານ.

**ມາດຕາ 29 ຄວາມຮັບຜິດຊອບຂອງຄະນະອຳນວຍການ**

ຄະນະອຳນວຍການຂອງລັດວິສາຫະກິດ ມີຄວາມຮັບຜິດຊອບໂດຍກົງ ຕໍ່ຜົນໄດ້, ຜົນເສຍ ໃນການດຳເນີນທຸລະກິດ, ນອກຈາກນັ້ນ ຍັງຈະມີຄວາມຮັບຜິດຊອບຕາມກົດໝາຍຕໍ່ການກະທຳຂອງຕົນທີ່ເປັນການລະເມີດກົດໝາຍ, ກົດລະບຽບຂອງລັດວິສາຫະກິດ, ມະຕິຂອງກອງປະຊຸມຜູ້ຖືຮຸ້ນ ຫຼື ສະພາບໍລິຫານ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

**ມາດຕາ 30 ການຈັດຕັ້ງພັກ ແລະ ອົງການຈັດຕັ້ງມະຫາຊົນ**

ລັດວິສາຫະກິດ ໃຫ້ມີການຈັດຕັ້ງພັກ ແລະ ອົງການຈັດຕັ້ງມະຫາຊົນ ເຊັ່ນ ສະຫະພັນກຳມະບານລາວ, ຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ສະຫະພັນແມ່ຍິງລາວ.

## ໝວດທີ 3
## ຊັບສິນ, ການເພີ່ມ ຫຼື ຫຼຸດທຶນ ແລະ ເຂົ້າຫາແຫຼ່ງທຶນ

**ມາດຕາ 31 ຊັບສິນຂອງລັດວິສາຫະກິດ**

ຊັບສິນຂອງລັດວິສາຫະກິດ ປະກອບດ້ວຍ ຊັບສິນຄົງທີ່ ແລະ ຊັບສິນໝູນວຽນ ທີ່ນາໃຊ້ເຂົ້າໃນການດຳເນີນທຸລະກິດ ຊຶ່ງໄດ້ມາຈາກການປະກອບທຶນເບື້ອງຕົ້ນຂອງລັດ, ຜູ້ຖືຮຸ້ນໃນກໍລະນີມີພາກສ່ວນອື່ນຮ່ວມທຶນນຳ, ການກູ້ຢືມ, ການຊ່ວຍເຫຼືອລ້າ ແລະ ກຳໄລສະສົມຈາກການດຳເນີນທຸລະກິດ.

**ມາດຕາ 32 ການເພີ່ມທຶນຈົດທະບຽນ**

ລັດວິສາຫະກິດ ສາມາດເພີ່ມທຶນຈົດທະບຽນຂອງຕົນໄດ້ ຕາມກໍລະນີ ດັ່ງນີ້

1. ລັດວິສາຫະກິດຖືຮຸ້ນຮ້ອຍສ່ວນຮ້ອຍ ແມ່ນ ລັດຖະບານ ເປັນຜູ້ພິຈາລະນາປະກອບທຶນໃຫ້ ຕາມການສະເໜີຂອງກະຊວງການເງິນ ບົນພື້ນຖານມະຕິຂອງສະພາບໍລິຫານ;

2. ລັດວິສາຫະກິດທີ່ມີພາກສ່ວນອື່ນຖືຮຸ້ນນຳ ແມ່ນກອງປະຊຸມຜູ້ຖືຮຸ້ນ ເປັນຜູ້ຕົກລົງເພີ່ມທຶນຈົດທະບຽນດ້ວຍການເພີ່ມມູນຄ່າຮຸ້ນ ຫຼື ເພີ່ມຈຳນວນຮຸ້ນຂຶ້ນ. ຫຼັງຈາກນັ້ນສະເໜີຫາກະຊວງການເງິນ ເພື່ອຄົ້ນຄວ້າ ແລ້ວນຳສະເໜີລັດຖະບານ ເປັນຜູ້ຕົກລົງ.

ການເພີ່ມທຶນຈົດທະບຽນ ຕ້ອງໄດ້ປັບປຸງສັນຍາຮ່ວມທຶນ, ກົດລະບຽບຂອງລັດວິສາຫະກິດ ແລະ ແຈ້ງປ່ຽນແປງທະບຽນວິສາຫະກິດ.

**ມາດຕາ 33 ການຫຼຸດທຶນຈົດທະບຽນ**

ລັດວິສາຫະກິດ ສາມາດຫຼຸດທຶນຈົດທະບຽນຂອງຕົນ ເພື່ອໃຫ້ສອດຄ່ອງກັບສະພາບຄວາມເປັນຈິງຂອງການດຳເນີນທຸລະກິດ ຕາມກໍລະນີ ດັ່ງນີ້:

1. ລັດວິສາຫະກິດຖືຮຸ້ນຮ້ອຍສ່ວນຮ້ອຍ ແມ່ນ ລັດຖະບານ ເປັນຜູ້ພິຈາລະນາຕົກລົງຫຼຸດທຶນຈົດທະບຽນຕາມການສະເໜີຂອງກະຊວງການເງິນ ບົນພື້ນຖານມະຕິຂອງສະພາບໍລິຫານ;

2. ລັດວິສາຫະກິດທີ່ມີພາກສ່ວນອື່ນຖືຮຸ້ນນຳ ແມ່ນ ກອງປະຊຸມຜູ້ຖືຮຸ້ນ ເປັນຜູ້ຕົກລົງຫຼຸດທຶນຈົດທະບຽນດ້ວຍການຫຼຸດມູນຄ່າຮຸ້ນ ຫຼື ຫຼຸດຈຳນວນຮຸ້ນລົງ. ຫຼັງຈາກນັ້ນສະເໜີຫາກະຊວງການເງິນ ເພື່ອຄົ້ນຄວ້າ ແລ້ວນຳສະເໜີລັດຖະບານ ເປັນຜູ້ຕົກລົງ.

ການຫຼຸດທຶນຈົດທະບຽນ ຕ້ອງໄດ້ປັບປຸງສັນຍາຮ່ວມທຶນ, ກົດລະບຽບຂອງລັດວິສາຫະກິດ ແລະ ແຈ້ງປ່ຽນແປງທະບຽນວິສາຫະກິດ.

ເງື່ອນໄຂການຫຼຸດທຶນຈົດທະບຽນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍວິສາຫະກິດ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 34 ການຂາຍຮຸ້ນຂອງລັດວິສາຫະກິດ**

ລັດວິສາຫະກິດ ສາມາດຂາຍຮຸ້ນຂອງຕົນ ສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ ໃຫ້ບຸກຄົນ, ນິຕິບຸກຄົນ ຕາມການຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ ຫຼື ສະພາບໍລິຫານ ແລ້ວສະເໜີກະຊວງການເງິນ ເພື່ອຄົ້ນຄວ້າ ພິຈາລະນາ ແລະ ລາຍງານ ລັດຖະບານ ເປັນຜູ້ຕົກລົງ. ຖ້າການຂາຍນັ້ນ ຫາກເຮັດໃຫ້ອັດຕາສ່ວນຮຸ້ນຂອງລັດ ຕໍ່າກວ່າ ຫ້າສິບສ່ວນຮ້ອຍຕ້ອງຫັນລັດວິສາຫະກິດນັ້ນ ເປັນວິສາຫະກິດຮູບແບບອື່ນ.

**ມາດຕາ 35 ການເຂົ້າເຖິງແຫຼ່ງທຶນຂອງລັດວິສາຫະກິດ**

ລັດວິສາຫະກິດ ສາມາດເຂົ້າເຖິງແຫຼ່ງທຶນ ຕາມການຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ ຫຼື ສະພາບໍລິຫານ ແລະ ຕ້ອງໄດ້ຮັບການເຫັນດີຈາກກະຊວງການເງິນ ດ້ວຍການເອົາຊັບສິນທີ່ເປັນກຳມະສິດຂອງຕົນ ເປັນຕົ້ນ ທີ່ດິນ, ສິ່ງປຸກສ້າງ, ພາຫະນະ, ເຄື່ອງຈັກ ໄປເປັນຫຼັກຊັບຄ້ຳປະກັນໃນການກູ້ຢືມເງິນຈາກສະຖາບັນການເງິນ ທັງພາຍໃນ ແລະ ຕ່າງປະເທດ ຫຼື ໂດຍການລະດົມທຶນຈາກມວນຊົນ ດ້ວຍການອອກຈຳໜ່າຍຮຸ້ນ, ໂດຍຜ່ານ ຫຼື ບໍ່ຜ່ານຫຼັກຊັບອື່ນ ຮຸ້ນກູ້ ຫຼື ຕະຫຼາດຫຼັກຊັບ ໂດຍປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ສຳລັບການເອົາທີ່ດິນ ໄປເປັນຫຼັກຊັບຄ້ຳປະກັນນັ້ນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍທີ່ດິນ.

**ມາດຕາ 36 ຄວາມຮັບຜິດຊອບຕໍ່ການກູ້ຢືມ**

ລັດວິສາຫະກິດ ຕ້ອງນຳໃຊ້ເງິນກູ້ຢືມໃຫ້ຖືກຕ້ອງ ຕາມຈຸດປະສົງ, ເປົ້າໝາຍ ຢ່າງເຂັ້ມງວດ ແລະ ມີປະສິດທິຜົນສູງສຸດ ພ້ອມທັງຄຸ້ມຄອງ, ຕິດຕາມ ກວດກາການນຳໃຊ້ເງິນກູ້ຢືມດັ່ງກ່າວ.

ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ, ອົງການຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ບໍລິສັດກວດສອບອິດສະລະ ສາມາດດຳເນີນການກວດກາ, ກວດສອບການນຳໃຊ້ເງິນກູ້ຢືມ ເຂົ້າໃນການດຳເນີນທຸລະກິດ ຖ້າວ່າການນຳໃຊ້ນັ້ນ ຫາກບໍ່ສອດຄ່ອງຕາມຈຸດປະສົງ ແລະ ເປົ້າໝາຍ ລັດວິສາຫະກິດ ຕ້ອງຮັບຜິດຊອບຕາມກົດໝາຍ ແລະ ໃຊ້ແທນຄ່າເສຍຫາຍທີ່ເກີດຂຶ້ນ.

## ໝວດທີ 4
## ການປັບປຸງໂຄງສ້າງ, ການຄວບ ແລະ ການຫັນລັດວິສາຫະກິດ

**ມາດຕາ 37 ການປັບປຸງໂຄງສ້າງລັດວິສາຫະກິດ**

ລັດວິສາຫະກິດທີ່ດຳເນີນທຸລະກິດ ບໍ່ມີປະສິດທິຜົນ, ຂາດທຶນ, ມີຄວາມຫຍຸ້ງຍາກດ້ານການເງິນ, ບໍ່ສາມາດຊຳລະໜີ້ສິນ ຫຼື ຢູ່ໃນສະພາບລົ້ມລະລາຍ ຕ້ອງໄດ້ມີການປັບປຸງໂຄງສ້າງລັດວິສາຫະກິດ.

ຄະນະອຳນວຍການ ມີຄວາມຮັບຜິດຊອບຄົ້ນຄວ້າສ້າງແຜນປັບປຸງໂຄງສ້າງເບື້ອງຕົ້ນ ເພື່ອສະເໜີກອງປະຊຸມຜູ້ຖືຮຸ້ນ ຫຼື ສະພາບໍລິຫານ ພິຈາລະນານຳສະເໜີກະຊວງການເງິນ. ພາຍຫຼັງໄດ້ຮັບຂໍ້ສະເໜີ ກະຊວງການເງິນ ປະສານສົມທົບກັບລັດວິສາຫະກິດ, ກະຊວງ, ອົງການທີ່ລັດວິສາຫະກິດຂຶ້ນກັບ ແລະ ພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າກ່ຽວກັບການປັບປຸງໂຄງສ້າງລັດວິສາຫະກິດ ເພື່ອສະເໜີໃຫ້ລັດຖະບານ ພິຈາລະນາ.

ໃນກໍລະນີບໍ່ມີການສະເໜີປັບປຸງໂຄງສ້າງ ຖ້າເຫັນວ່າມີຄວາມຈຳເປັນ ກະຊວງການເງິນ ເປັນເຈົ້າການປະສານສົມທົບກັບລັດວິສາຫະກິດ, ກະຊວງ, ອົງການທີ່ລັດວິສາຫະກິດຂຶ້ນກັບ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າກ່ຽວກັບການປັບປຸງໂຄງສ້າງລັດວິສາຫະກິດ.

ເມື່ອລັດຖະບານ ຕົກລົງໃຫ້ປັບປຸງໂຄງສ້າງແລ້ວ ກະຊວງການການເງິນ ປະສານສົມທົບກັບລັດວິສາຫະກິດ, ກະຊວງ, ອົງການທີ່ລັດວິສາຫະກິດຂຶ້ນກັບ ແລະ ພາກສ່ວນທີ່ກ່ຽວຂ້ອງ ແຕ່ງຕັ້ງຄະນະປັບປຸງລັດວິສາຫະກິດ ເພື່ອສ້າງແຜນ ແລະ ດຳເນີນການປັບປຸງໂຄງສ້າງລັດວິສາຫະກິດ.

**ມາດຕາ 38 ເນື້ອໃນການປັບປຸງໂຄງສ້າງ**

ການປັບປຸງໂຄງສ້າງລັດວິສາຫະກິດ ມີ ເນື້ອໃນຕົ້ນຕໍ ດັ່ງນີ້:

1. ປັບໂຄງສ້າງດ້ານການເງິນ ເປັນຕົ້ນ ປັບອັດຕາສ່ວນໜີ້ຕໍ່ສ່ວນທຶນ, ແກ້ໄຂສະພາບໜີ້ສິນ, ຕີມູນຄ່າຊັບສິນຄືນໃໝ່;

2. ປັບໂຄງສ້າງດ້ານການດຳເນີນທຸລະກິດ ເປັນຕົ້ນ ປັບກົນໄກການຄຸ້ມຄອງບໍລິຫານ, ມີແຜນການທຸລະກິດ ມີມາດຕະການຫຼຸດຕົ້ນທຶນ;

3. ປັບໂຄງສ້າງດ້ານການຈັດຕັ້ງ ແລະ ບຸກຄະລາກອນ.

**ມາດຕາ 39 ຄະນະປັບປຸງລັດວິສາຫະກິດ**

ຄະນະປັບປຸງລັດວິສາຫະກິດ ແມ່ນ ຄະນະສະເພາະກິດທີ່ຖືກແຕ່ງຕັ້ງ ເພື່ອດຳເນີນການກວດກາ ແລະ ປັບປຸງໂຄງສ້າງຂອງລັດວິສາຫະກິດ ທີ່ເຄື່ອນໄຫວບໍ່ມີປະສິດທິຜົນ ຫຼື ມີປະສິດທິຜົນຕ່ຳ ຊຶ່ງປະກອບດ້ວຍ ຜູ້ຕາງໜ້າຈາກກະຊວງການເງິນ, ກະຊວງ, ອົງການທີ່ລັດວິສາຫະກິດຂຶ້ນກັບ, ລັດວິສາຫະກິດ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ຄະນະປັບປຸງລັດວິສາຫະກິດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງແຜນການປັບປຸງໂຄງສ້າງລັດວິສາຫະກິດ;

2. ຮຽກໃຫ້ສະພາບໍລິຫານ, ຄະນະອຳນວຍການ ແລະ ພະນັກງານຂອງລັດວິສາຫະກິດ ສະໜອງຂໍ້ມູນ ແລະ ເອກະສານຕ່າງໆ ທີ່ກ່ຽວຂ້ອງກັບການເຄື່ອນໄຫວຂອງລັດວິສາຫະກິດ ລວມທັງອະທິບາຍ, ຊີ້ແຈງຕໍ່ບັນຫາຕ່າງໆ;

3. ກວດກາ, ເກັບກຳຂໍ້ມູນ ກ່ຽວກັບລັດວິສາຫະກິດ ເປັນຕົ້ນ ການຈັດຕັ້ງ, ຊັບສິນ, ໜີ້ສິນ, ບົດລາຍງານການເງິນ, ບົດລາຍງານຊັບສິນບັດ ແລະ ການຄຸ້ມຄອງບໍລິຫານ;

4. ແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນ ພາຍໃນລັດວິສາຫະກິດ, ລັດວິສາຫະກິດກັບພາກສ່ວນອື່ນ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ;

5. ສະເໜີກະຊວງການເງິນ ພິຈາລະນາ ໃຫ້ລັດວິສາຫະກິດໂຈະຊົ່ວຄາວ ການດຳເນີນທຸລະກິດ ຫຼື ການເຄື່ອນໄຫວກິດຈະການໃດໜຶ່ງ ທີ່ສ້າງຜົນເສຍຫາຍໃຫ້ແກ່ລັດວິສາຫະກິດ;

6. ສະເໜີກະຊວງການເງິນ ພິຈາລະນາການປະຕິບັດວິໄນ ຕໍ່ຜູ້ຕາງໜ້າຜູ້ຖືຮຸ້ນຂອງລັດ, ສະມາຊິກສະພາບໍລິຫານ, ຄະນະອຳນວຍການ ແລະ ພະນັກງານຂອງລັດວິສາຫະກິດ ທີ່ລະເມີດດຳລັດສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

7. ປະສານສົມທົບກັບກະຊວງ, ອົງການທີ່ລັດວິສາຫະກິດຂຶ້ນກັບ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການດຳເນີນການປັບປຸງໂຄງສ້າງລັດວິສາຫະກິດ;

8. ກຳນົດຄ່າໃຊ້ຈ່າຍ ໃນການດຳເນີນການປັບປຸງໂຄງສ້າງລັດວິສາຫະກິດ ເພື່ອສະເໜີກະຊວງການເງິນພິຈາລະນາ;

9. ສະຫຼຸບ ແລະ ລາຍງານ ກ່ຽວກັບການປັບປຸງໂຄງສ້າງລັດວິສາຫະກິດ ໃຫ້ກະຊວງການເງິນ ແລະ ຜູ້ຖືຮຸ້ນ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ.

**ມາດຕາ 40 ການຄວບລັດວິສາຫະກິດ**

ການຄວບລັດວິສາຫະກິດ ມີ ຮູບແບບ ດັ່ງນີ້:

1. ການຄວບລັດວິສາຫະກິດໃດໜຶ່ງກັບລັດວິສາຫະກິດອື່ນ ເພື່ອໂຮມຕົວເຂົ້າກັນເປັນລັດວິສາຫະກິດໃດໜຶ່ງ ຫຼື ສ້າງຕັ້ງເປັນລັດວິສາຫະກິດໃໝ່;

2. ການຄວບລັດວິສາຫະກິດໃດໜຶ່ງກັບວິສາຫະກິດພາກສ່ວນອື່ນ ເພື່ອໂຮມຕົວເຂົ້າກັນໂດຍຮັກສາຮູບແບບລັດວິສາຫະກິດເດີມ ຫຼື ສ້າງຕັ້ງເປັນລັດວິສາຫະກິດໃໝ່;

3. ການຄວບລັດວິສາຫະກິດໃດໜຶ່ງກັບວິສາຫະກິດພາກສ່ວນອື່ນ ເພື່ອໂຮມຕົວເຂົ້າກັນໂດຍຮັກສາຮູບແບບເດີມຂອງວິສາຫະກິດພາກສ່ວນອື່ນ ຫຼື ສ້າງເປັນວິສາຫະກິດຮູບແບບອື່ນ.

ການຄວບລັດວິສາຫະກິດ ຕ້ອງມີມະຕິຂອງກອງປະຊຸມຜູ້ຖືຮຸ້ນ ຫຼື ສະພາບໍລິຫານ ແລ້ວນຳສະເໜີກະຊວງການເງິນ ຄົ້ນຄວ້າ ພິຈາລະນາ ເພື່ອສະເໜີລັດຖະບານ ພິຈາລະນາ.

**ມາດຕາ 41 ການຫັນລັດວິສາຫະກິດໄປສູ່ຮູບແບບອື່ນ**

ການຫັນລັດວິສາຫະກິດໄປສູ່ຮູບແບບອື່ນ ແມ່ນ ການປ່ຽນລັດວິສາຫະກິດ ໄປເປັນວິສາຫະກິດປະເພດອື່ນ ແລະ ຮູບແບບອື່ນ ເຊັ່ນ ບໍລິສັດຈຳກັດ, ບໍລິສັດມະຫາຊົນ ຕາມນະໂຍບາຍຂອງລັດ, ກົນໄກເສດຖະກິດຕະຫຼາດ ໃນແຕ່ລະໄລຍະ ເພື່ອປັບປຸງ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ວິສາຫະກິດ.

ລັດວິສາຫະກິດ ທີ່ມີຈຸດປະສົງຫັນໄປສູ່ຮູບແບບອື່ນ ໃຫ້ສະເໜີຕໍ່ກະຊວງການເງິນ ບົນພື້ນຖານການຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ ຫຼື ສະພາບໍລິຫານ. ພາຍຫຼັງໄດ້ຮັບຂໍ້ສະເໜີ ກະຊວງການເງິນ ປະສານສົມທົບກັບລັດວິສາຫະກິດ, ກະຊວງ, ອົງການທີ່ລັດວິສາຫະກິດຂຶ້ນກັບ ແລະ ພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າກ່ຽວກັບການຫັນລັດວິສາຫະກິດ ເພື່ອສະເໜີໃຫ້ລັດຖະບານ ພິຈາລະນາ.

ໃນກໍລະນີບໍ່ມີການສະເໜີຫັນ ແຕ່ຖ້າເຫັນວ່າມີຄວາມຈຳເປັນ ກະຊວງການເງິນ ເປັນເຈົ້າການປະສານສົມທົບກັບລັດວິສາຫະກິດ, ກະຊວງ, ອົງການທີ່ລັດວິສາຫະກິດຂຶ້ນກັບ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າການຫັນລັດວິສາຫະກິດ.

ເມື່ອລັດຖະບານ ຕົກລົງໃຫ້ຫັນລັດວິສາຫະກິດແລ້ວ ກະຊວງການເງິນ ປະສານສົມທົບກັບລັດວິສາຫະກິດ, ກະຊວງ, ອົງການທີ່ລັດວິສາຫະກິດຂຶ້ນກັບ ແລະ ພາກສ່ວນທີ່ກ່ຽວຂ້ອງ ແຕ່ງຕັ້ງຄະນະກຳມະການຫັນລັດວິສາຫະກິດ ເພື່ອສ້າງແຜນ, ປະເມີນມູນຄ່າຊັບສິນ ແລະ ດຳເນີນການຫັນລັດວິສາຫະກິດ ພ້ອມທັງດຳເນີນການສ້າງຕັ້ງວິສາຫະກິດໃໝ່ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຕ້ອງຄົ້ນຄວ້າ, ເລືອກເຟັ້ນ ລັດວິສາຫະກິດທີ່ຢູ່ໃນການຄຸ້ມຄອງຂອງຕົນ ເພື່ອກຳນົດເປັນລັດວິສາຫະກິດຍຸດທະສາດ, ສ່ວນລັດວິສາຫະກິດໃດ ທີ່ບໍ່ແມ່ນລັດວິສາຫະກິດຍຸດທະສາດ ກໍໃຫ້ພິຈາລະນາຫັນເປັນວິສາຫະກິດຮູບແບບອື່ນ.

ກະຊວງການເງິນ ປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຄົ້ນຄວ້າສ້າງແຜນປັບປຸງລັດວິສາຫະກິດ ທີ່ກຳນົດເປົ້າໝາຍລັດວິສາຫະກິດທີ່ຈະຫັນໄປສູ່ຮູບແບບອື່ນ ເພື່ອສະເໜີລັດຖະບານພິຈາລະນາ.

**ມາດຕາ 42 ຄະນະກຳມະການຫັນລັດວິສາຫະກິດ**

ຄະນະກຳມະການຫັນລັດວິສາຫະກິດ ແມ່ນ ຄະນະສະເພາະກິດທີ່ຖືກແຕ່ງຕັ້ງ ໂດຍກະຊວງການເງິນ ເພື່ອດຳເນີນການຫັນລັດວິສາຫະກິດ ຊຶ່ງປະກອບດ້ວຍ ຜູ້ຕາງໜ້າຈາກກະຊວງການເງິນ, ກະຊວງ, ອົງການທີ່ລັດວິສາຫະກິດຂຶ້ນກັບ, ລັດວິສາຫະກິດ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ຄະນະກຳມະການຫັນລັດວິສາຫະກິດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ສ້າງແຜນການຫັນລັດວິສາຫະກິດ ແລະ ແຜນການຊຳລະສະສາງ;
2. ກວດກາ, ເກັບກຳຂໍ້ມູນ ກ່ຽວກັບລັດວິສາຫະກິດ ເປັນຕົ້ນ ການຈັດຕັ້ງ, ຊັບສິນ, ໜີ້ສິນ, ບົດລາຍງານການເງິນ, ບົດລາຍງານຊັບສົມບັດ ແລະ ການຄຸ້ມຄອງບໍລິຫານ;
3. ປະເມີນຊັບສິນຂອງລັດວິສາຫະກິດຄືນໃໝ່;
4. ຮຽກໃຫ້ ສະພາບໍລິຫານ, ຄະນະອຳນວຍການ ແລະ ພະນັກງານຂອງລັດວິສາຫະກິດ ສະໜອງຂໍ້ມູນ ແລະ ເອກະສານຕ່າງໆ ທີ່ກ່ຽວຂ້ອງກັບການເຄື່ອນໄຫວຂອງລັດວິສາຫະກິດ ລວມທັງອະທິບາຍ, ຊີ້ແຈງຕໍ່ບັນຫາຕ່າງໆ;
5. ສະເໜີກະຊວງການເງິນ ພິຈາລະນາວ່າຈ້າງບໍລິສັດທີ່ປຶກສາດ້ານ ການເງິນ, ການບັນຊີ, ກົດໝາຍ ແລະ ອື່ນໆ ທີ່ເຫັນວ່າມີຄວາມຈຳເປັນ;
6. ດຳເນີນການຫັນລັດວິສາຫະກິດ ແລະ ສ້າງຕັ້ງເປັນວິສາຫະກິດໃໝ່ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
7. ແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນ ພາຍໃນລັດວິສາຫະກິດ, ລັດວິສາຫະກິດກັບພາກສ່ວນອື່ນ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ;

8. ສະເໜີກະຊວງການເງິນ ພິຈາລະນາໃຫ້ລັດວິສາຫະກິດໂຈະຊົ່ວຄາວ ການດຳເນີນທຸລະກິດ ຫຼື ການເຄື່ອນໄຫວກິດຈະການໃດໜຶ່ງ ທີ່ສ້າງຜົນເສຍຫາຍໃຫ້ແກ່ລັດວິສາຫະກິດ;

9. ສະເໜີກະຊວງການເງິນ ພິຈາລະນາການປະຕິບັດວິໄນ ຕໍ່ຜູ້ຕາງໜ້າຜູ້ຖືຮຸ້ນຂອງລັດ, ສະມາຊິກສະພາບໍລິຫານ, ຄະນະອຳນວຍການ ແລະ ພະນັກງານຂອງລັດວິສາຫະກິດ ທີ່ລະເມີດດຳລັດສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

10. ກຳນົດຄ່າໃຊ້ຈ່າຍໃນການຫັນລັດວິສາຫະກິດ ເພື່ອສະເໜີກະຊວງການເງິນ ພິຈາລະນາ;

11. ປະສານສົມທົບກັບກະຊວງ, ອົງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການດຳເນີນການຫັນລັດວິສາຫະກິດ;

12. ສະຫຼຸບ ແລະ ລາຍງານ ກ່ຽວກັບການຫັນລັດວິສາຫະກິດ ໃຫ້ກະຊວງການເງິນ ແລະ ຜູ້ຖືຮຸ້ນ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ.

**ມາດຕາ 43 ການຈົດທະບຽນໃນຕະຫຼາດຫຼັກຊັບ**

ພາຍຫຼັງທີ່ລັດວິສາຫະກິດ ໄດ້ຫັນເປັນບໍລິສັດມະຫາຊົນແລ້ວ ຫາກມີຈຸດປະສົງຈົດທະບຽນ ໃນຕະຫຼາດຫຼັກຊັບ ໃຫ້ປະຕິບັດຕາມເງື່ອນໄຂ, ຂັ້ນຕອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຫຼັກຊັບ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 5
## ການບັນຊີ, ການກວດສອບ ແລະ ການລາຍງານ

**ມາດຕາ 44 ການບັນຊີ**

ລັດວິສາຫະກິດ ຕ້ອງປະຕິບັດຕາມລະບົບ ແລະ ມາດຕະຖານການບັນຊີ ຢ່າງຄົບຖ້ວນ, ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ກ່ຽວກັບການບັນຊີ. ລັດວິສາຫະກິດ ຕ້ອງພັດທະນາກົນໄກ, ລະບົບການຄຸ້ມຄອງການບັນຊີ ໃຫ້ທັນສະໄໝ ແລະ ສອດຄ່ອງກັບຈຸດພິເສດການດຳເນີນທຸລະກິດຂອງວິສາຫະກິດ.

ສຳລັບລັດວິສາຫະກິດ ທີ່ດຳເນີນທຸລະກິດໃນຂະແໜງປະກັນໄພ ຫຼື ທະນາຄານ ໃຫ້ຈັດຕັ້ງປະຕິບັດລະບົບການບັນຊີປະກັນໄພ ຫຼື ທະນາຄານ ຕາມກົດໝາຍວ່າດ້ວຍການປະກັນໄພ, ກົດໝາຍວ່າດ້ວຍທະນາຄານທຸລະກິດ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ລັດວິສາຫະກິດ ຕ້ອງຮັກສາເອກະສານການບັນຊີເອົາໄວ້ ຢ່າງໜ້ອຍ ສິບປີ ເພື່ອໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ສາມາດກວດກາ, ກວດສອບໄດ້ທຸກເວລາ. ການຖືບັນຊີດ້ວຍລະບົບໂປຣແກຣມບັນຊີ ຕ້ອງຂຶ້ນທະບຽນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ປີການບັນຊີຂອງລັດວິສາຫະກິດ ເລີ່ມແຕ່ວັນທີ 1 ມັງກອນ ຫາ ວັນທີ 31 ທັນວາ ຂອງປີປະຕິທິນ.

**ມາດຕາ 45 ການກວດສອບພາຍໃນ**

ລັດວິສາຫະກິດ ຕ້ອງສ້າງລະບົບການກວດກາພາຍໃນຂອງຕົນ ໂດຍມີພະແນກ ຫຼື ຜູ້ກວດສອບພາຍໃນ ທີ່ຢູ່ພາຍໃຕ້ການຊີ້ນຳຂອງຄະນະກຳມະການກວດສອບພາຍໃນ ເພື່ອດຳເນີນການກວດກາຄວາມຖືກຕ້ອງທາງດ້ານການເງິນການບັນຊີ ແລະ ດ້ານອື່ນທີ່ກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ພະແນກ ຫຼື ຜູ້ກວດສອບພາຍໃນ ຕ້ອງຢັ້ງຢືນ ແລະ ລາຍງານຜົນຂອງການກວດສອບ ໃຫ້ຄະນະກຳມະການກວດສອບພາຍໃນ ແລະ ຜູ້ອຳນວຍການ ຢ່າງເປັນປົກກະຕິ.

**ມາດຕາ 46 ການກວດສອບພາຍນອກ**

ລັດວິສາຫະກິດທຸກຫົວໜ່ວຍ ຕ້ອງຖືກກວດສອບພາຍນອກ ຕາມກົດໝາຍວ່າດ້ວຍການກວດສອບອິດສະລະ ໂດຍໃຫ້ຄັດເລືອກ ແລະ ວ່າຈ້າງຜູ້ກວດສອບອິດສະລະ ເພື່ອມາດຳເນີນການກວດສອບ ນັບແຕ່ວັນສ້າງຕັ້ງລັດວິສາຫະກິດ ເປັນຕົ້ນໄປ.

**ມາດຕາ 47 ການລາຍງານ**

ລັດວິສາຫະກິດ ຕ້ອງສະຫຼຸບ ແລະ ລາຍງານຜົນຂອງການດຳເນີນທຸລະກິດ, ເອກະສານງານການເງິນ ປະຈຳໄຕມາດ, ຫົກເດືອນ ແລະ ປີ ໃຫ້ກະຊວງການເງິນ ຕາມກົດໝາຍວ່າດ້ວຍການບັນຊີ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ລັດວິສາຫະກິດ ຕ້ອງສົ່ງເອກະສານລາຍງານການເງິນປະຈຳໄຕມາດ ຢ່າງຊ້າບໍ່ໃຫ້ກາຍ ວັນທີ 20 ຂອງເດືອນຖັດໄປ. ສຳລັບເອກະສານລາຍງານການເງິນປະຈຳປີ ຕ້ອງສົ່ງບໍ່ໃຫ້ກາຍ ວັນທີ 31 ເດືອນ ມີນາ ຂອງປີຖັດໄປ.

ເອກະສານລາຍງານການເງິນ ຕ້ອງໄດ້ລົງລາຍເຊັນຈາກຜູ້ອຳນວຍການຂອງລັດວິສາຫະກິດ ແລະ ຖືກຮັບຮອງ ໂດຍກອງປະຊຸມຜູ້ຖືຮຸ້ນ ຫຼື ສະພາບໍລິຫານ.

ກະຊວງການເງິນ ເປັນຜູ້ສັງລວມ ແລະ ບັນທຶກ ຂໍ້ມູນລາຍງານການເງິນ, ການບັນຊີ ເຂົ້າໃນລະບົບຖານຂໍ້ມູນຂອງຕົນ ໃຫ້ຖືກຕ້ອງ ເພື່ອປະເມີນຜົນການດຳເນີນທຸລະກິດ ແລະ ການໄລ່ລຽງເງິນປັນຜົນ.

## ໝວດທີ 6
## ຄັງສຳຮອງ ແລະ ການແບ່ງເງິນປັນຜົນ

**ມາດຕາ 48 ຄັງສຳຮອງ**

ຄັງສຳຮອງຂອງລັດວິສາຫະກິດ ມີ ສອງ ປະເພດ ຄື: ຄັງສຳຮອງຕາມລະບຽບການ ແລະ ຄັງສຳຮອງອື່ນ.

ຄັງສຳຮອງຕາມລະບຽບການ ແມ່ນ ຄັງທີ່ສະສົມໄວ້ ເພື່ອເປັນແຫຼ່ງທຶນ ສຳລັບຮັບປະກັນຄວາມສ່ຽງ, ເຫດສຸດວິໄສ, ຖົມຊົດການຂາດທຶນ ຊຶ່ງໃຫ້ລັດວິສາຫະກິດ ຫັກໄວ້ສິບສ່ວນຮ້ອຍ ຂອງກຳໄລສຸດທິປະຈຳປີ. ເມື່ອຄັງສຳຮອງນີ້ ມີເງິນສະສົມຮອດເຄິ່ງໜຶ່ງຂອງທຶນຈົດທະບຽນແລ້ວ ໃຫ້ລັດວິສາຫະກິດນັ້ນ ໂຈະການຫັກເງິນເຂົ້າຄັງສຳຮອງດັ່ງກ່າວ.

ຄັງສຳຮອງອື່ນ ແມ່ນ ຄັງທີ່ສະສົມໄວ້ເພື່ອເປັນແຫຼ່ງທຶນ ສຳລັບຂະຫຍາຍການຜະລິດ, ກໍ່ສ້າງໂຄງລ່າງພື້ນຖານຖົມຊົດການຂາດທຶນ, ການພັດທະນາບຸກຄະລາກອນ ແລະ ອື່ນໆ ຊຶ່ງໃຫ້ລັດວິສາຫະກິດ ຫັກໄວ້ບໍ່ເກີນ ສາມສິບຫ້າສ່ວນຮ້ອຍ ຂອງກຳໄລສຸດທິປະຈຳປີ.

**ມາດຕາ 49 ການຄຸ້ມຄອງ ແລະ ນຳໃຊ້ຄັງສຳຮອງ**

ລັດວິສາຫະກິດ ຕ້ອງສ້າງລະບຽບການຄຸ້ມຄອງ ແລະ ນຳໃຊ້ຄັງສຳຮອງຕາມລະບຽບການ ແລະ ຄັງສຳຮອງອື່ນ ໂດຍມີການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ ຫຼື ສະພາບໍລິຫານ ແລ້ວສະເໜີກະຊວງການເງິນ ພິຈາລະນາຮັບຮອງ.

**ມາດຕາ 50 ການແບ່ງເງິນປັນຜົນ**

ລັດວິສາຫະກິດ ທີ່ເຄື່ອນໄຫວມີຜົນກຳໄລ ພາຍຫຼັງໄດ້ຫັກອາກອນລາຍໄດ້ ແລະ ຫັກເຂົ້າຄັງສຳຮອງ ຕາມການຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ ຫຼື ສະພາບໍລິຫານແລ້ວ ສ່ວນທີ່ເຫຼືອໃຫ້ມອບເຂົ້າງົບປະມານຂອງລັດ ສຳລັບລັດວິສາຫະກິດ ທີ່ລັດຖືຮຸ້ນຮ້ອຍສ່ວນຮ້ອຍ ຫຼື ນຳມາແບ່ງເງິນປັນຜົນ ຕາມອັດຕາສ່ວນການຖືຮຸ້ນ ສຳລັບລັດວິສາຫະກິດ ທີ່ມີພາກສ່ວນອື່ນຮ່ວມທຶນນຳ.

ສຳລັບລັດວິສາຫະກິດ ທີ່ຍັງຂາດທຶນຢ່າງຕໍ່ເນື່ອງໃນຊຸມປີຜ່ານມາ ບໍ່ອະນຸຍາດໃຫ້ແບ່ງເງິນປັນຜົນ.

**ມາດຕາ 51 ການໄລ່ລຽງເງິນປັນຜົນ**

ກະຊວງການເງິນ ເປັນຜູ້ຄົ້ນຄວ້າ ອອກລະບຽບການລະອຽດ ກ່ຽວກັບການໄລ່ລຽງ ແລະ ວິທີການແບ່ງເງິນປັນຜົນ.

## ໝວດທີ 7
## ການໂຈະ, ການຍຸບເລີກ ແລະ ການລົ້ມລະລາຍ

**ມາດຕາ 52 ການໂຈະການດໍາເນີນທຸລະກິດຊົ່ວຄາວ**

ກະຊວງການເງິນ ສາມາດສັ່ງໂຈະລັດວິສາຫະກິດ ຢຸດເຊົາການດໍາເນີນທຸລະກິດຊົ່ວຄາວ ຕາມກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມການສະເໜີຂອງລັດວິສາຫະກິດ;
2. ມີໄພພິບັດ ຫຼື ເຫດສຸດວິໄສເກີດຂຶ້ນ ທີ່ສົ່ງຜົນກະທົບຕໍ່ການດໍາເນີນທຸລະກິດ;
3. ເຄື່ອນໄຫວບໍ່ຖືກຕ້ອງຕາມເປົ້າໝາຍ ແລະ ຂອບເຂດຂອງການດໍາເນີນທຸລະກິດ ຕາມທີ່ໄດ້ຮັບອະນຸຍາດ;
4. ມີການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ທະນາຄານ ແຫ່ງ ສປປ ລາວ ສາມາດສັ່ງໂຈະທະນາຄານທຸລະກິດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍທະນາຄານທຸລະກິດ ແລະ ກົດໝາຍທີ່ກ່ຽວຂ້ອງ.

ລັດວິສາຫະກິດ ທີ່ຖືກໂຈະການດໍາເນີນທຸລະກິດ ຕ້ອງປັບປຸງແກ້ໄຂບັນຫາ ຫຼື ສາເຫດຂອງການໂຈະ ຕາມກໍານົດເວລາທີ່ໄດ້ກໍານົດໄວ້ໃນຄໍາສັ່ງໂຈະ.

ການໂຈະການດໍາເນີນທຸລະກິດ ຕ້ອງແຈ້ງໃຫ້ກະຊວງ ແລະ ອົງການທີ່ກ່ຽວຂ້ອງ.

**ມາດຕາ 53 ການຍຸບເລີກ**

ລັດວິສາຫະກິດ ຈະຖືກຍຸບເລີກ ຕາມກໍລະນີໃດໜຶ່ງ ດັ່ງນີ້:

1. ບໍ່ປັບປຸງແກ້ໄຂບັນຫາ ຫຼື ສາເຫດຂອງການໂຈະ ຕາມກໍານົດເວລາທີ່ໄດ້ກໍານົດໄວ້ໃນຄໍາສັ່ງໂຈະ;
2. ມີການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຢ່າງຮ້າຍແຮງ;
3. ເຄື່ອນໄຫວທຸລະກິດ ບໍ່ມີປະສິດທິພາບ ແລະ ປະສິດທິຜົນ;
4. ສານຕັດສິນໃຫ້ຍຸບເລີກ.

ການຍຸບເລີກລັດວິສາຫະກິດ ຕາມທີ່ໄດ້ກໍານົດໄວ້ໃນຂໍ້ 1 ຫາ 3 ຂອງມາດຕານີ້ ໃຫ້ກະຊວງການເງິນ ຫຼື ກະຊວງ, ອົງການທີ່ກ່ຽວຂ້ອງ ຄົ້ນຄວ້າສະເໜີລັດຖະບານ ພິຈາລະນາຍຸບເລີກ. ພາຍຫຼັງທີ່ລັດຖະບານ ພິຈາລະນາຍຸບເລີກແລ້ວ ຕ້ອງແຕ່ງຕັ້ງຄະນະກໍາມະການ ຊຶ່ງປະກອບມີ ຜູ້ຕາງໜ້າຈາກກະຊວງການເງິນ, ກະຊວງ, ອົງການທີ່ລັດວິສາຫະກິດຂຶ້ນກັບ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອດໍາເນີນການຊໍາລະສະສາງ.

ການຍຸບເລີກ ລັດວິສາຫະກິດທີ່ດໍາເນີນທຸລະກິດປະກັນໄພ ຫຼື ທະນາຄານ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 54 ການລົ້ມລະລາຍ**

ລັດວິສາຫະກິດ ທີ່ເຄື່ອນໄຫວທຸລະກິດບໍ່ມີປະສິດທິພາບ ແລະ ປະສິດທິຜົນ, ຕົກຢູ່ໃນສະພາວະລົ້ມລະລາຍ ຫຼື ໃກ້ຈະຢູ່ໃນສະພາວະລົ້ມລະລາຍ ກໍສາມາດຮ້ອງຂໍ ຫຼື ຖືກຮ້ອງຟ້ອງ ໃຫ້ສານພິຈາລະນາຕັດສິນ ໃຫ້ລັດວິສາຫະກິດນັ້ນລົ້ມລະລາຍ.

ສໍາລັບຂັ້ນຕອນ, ວິທີການ ການລົ້ມລະລາຍຂອງລັດວິສາຫະກິດ ລວມທັງການຊໍາລະສະສາງ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ.

ສໍາລັບການລົ້ມລະລາຍ ແລະ ການຊໍາລະສະສາງຂອງລັດວິສາຫະກິດ ທີ່ດໍາເນີນທຸລະກິດປະກັນໄພ ຫຼື ທະນາຄານ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ.

## ພາກທີ IV
## ວິສາຫະກິດປະສົມ

### ມາດຕາ 55 ການສະເໜີຂໍລົງທຶນໃນວິສາຫະກິດປະສົມ

ກະຊວງ, ອົງການ ທີ່ມີຈຸດປະສົງລົງທຶນໃນກິດຈະການໃດໜຶ່ງ ຮ່ວມກັບພາກສ່ວນອື່ນ ຕ້ອງສະເໜີກະຊວງການເງິນ ເພື່ອຄົ້ນຄວ້າແລ້ວນໍາສະເໜີລັດຖະບານ ພິຈາລະນາການລົງທຶນຮ່ວມ. ໃນກໍລະນີວິສາຫະກິດຂອງລັດ ທີ່ມີຈຸດປະສົງຮ່ວມທຶນກັບພາກສ່ວນອື່ນ ໃຫ້ສະເໜີກະຊວງທີ່ຕົນຂຶ້ນກັບ ເພື່ອພິຈາລະນາສະເໜີຕໍ່ກະຊວງການເງິນ.

ເອກະສານປະກອບການສະເໜີຂໍລົງທຶນ ມີ ດັ່ງນີ້:

1. ໜັງສືສະເໜີຂໍຮ່ວມລົງທຶນ;
2. ບົດບັນທຶກຄວາມເຂົ້າໃຈ;
3. ເອກະສານຢັ້ງຢືນແຫຼ່ງທຶນຂອງຜູ້ຮ່ວມທຶນ;
4. ສັນຍາພັດທະນາໂຄງການ ຖ້າມີ;
5. ບົດວິພາກເສດຖະກິດ-ເຕັກນິກ;
6. ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
7. ແຜນຜັງສ້າງຕັ້ງໂຮງງານ ຖ້າມີ.

ພາຍຫຼັງທີ່ລັດຖະບານ ອະນຸມັດໃຫ້ລົງທຶນຮ່ວມແລ້ວ ກະຊວງການເງິນ ປະສານສົມທົບກັບກະຊວງ, ອົງການ ແລະ ອົງການຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແຕ່ງຕັ້ງຄະນະກໍາມະການຄົ້ນຄວ້າການຮ່ວມທຶນ ເພື່ອຄົ້ນຄວ້າປະຫວັດ ແລະ ຖານະທາງດ້ານການເງິນຂອງຜູ້ຮ່ວມທຶນ, ແຫຼ່ງທຶນ, ເຈລະຈາອັດຕາສ່ວນການຖືຮຸ້ນ, ສັນຍາຮ່ວມທຶນ ແລະ ບັນຫາອື່ນທີ່ກ່ຽວຂ້ອງ ແລ້ວລາຍງານລັດຖະບານ ເພື່ອພິຈາລະນາມອບສິດໃຫ້ກະຊວງການເງິນ ໃນການເຊັນສັນຍາຮ່ວມທຶນ.

### ມາດຕາ 56 ການສ້າງຕັ້ງວິສາຫະກິດປະສົມ

ກະຊວງການເງິນ ປະສານສົມທົບກັບກະຊວງ, ອົງການທີ່ກ່ຽວຂ້ອງ ແລະ ຜູ້ຮ່ວມທຶນ ກະກຽມເງື່ອນໄຂ ແລະ ເອກະສານຕ່າງໆ ເພື່ອສ້າງຕັ້ງວິສາຫະກິດປະສົມ ຕາມຮູບແບບ, ຮູບການ ທີ່ໄດ້ກໍານົດໄວ້ໃນສັນຍາຮ່ວມທຶນ ເປັນຕົ້ນ ການກໍານົດບຸກຄະລາກອນຈາກຝ່າຍລັດ, ກົດລະບຽບຂອງວິສາຫະກິດ ແລະ ແຜນດໍາເນີນທຸລະກິດ ສາມປີ ທໍາອິດ.

ຜູ້ທີ່ຈະເປັນຜູ້ຕາງໜ້າຜູ້ຖືຮຸ້ນ, ເປັນປະທານ, ຮອງປະທານ, ຄະນະກໍາມະການຂອງສະພາບໍລິຫານ ແລະ ຄະນະອໍານວຍການວິສາຫະກິດປະສົມຈາກຝ່າຍລັດ ຕ້ອງໄດ້ຮັບການແຕ່ງຕັ້ງຈາກລັດຖະມົນຕີກະຊວງການເງິນ.

ຂັ້ນຕອນການສ້າງຕັ້ງວິສາຫະກິດປະສົມ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍວິສາຫະກິດ ແລະ ກົດໝາຍທີ່ກ່ຽວຂ້ອງ.

### ມາດຕາ 57 ກອງປະຊຸມສ້າງຕັ້ງວິສາຫະກິດປະສົມ

ພາຍຫຼັງໄດ້ກະກຽມເງື່ອນໄຂ ແລະ ເອກະສານຕ່າງໆ ກ່ຽວກັບການສ້າງຕັ້ງແລ້ວ ກະຊວງການເງິນ ເປັນເຈົ້າການຈັດກອງປະຊຸມສ້າງຕັ້ງວິສາຫະກິດປະສົມ ຊຶ່ງມີຜູ້ເຂົ້າຮ່ວມ ດັ່ງນີ້:

1. ພາກລັດ ມີຜູ້ຕາງໜ້າຈາກກະຊວງການເງິນ ແລະ ກະຊວງ, ອົງການທີ່ກ່ຽວຂ້ອງ;
2. ຜູ້ຮ່ວມທຶນ.

ກອງປະຊຸມສ້າງຕັ້ງ ພິຈາລະນາຕົກລົງບັນຫາສໍາຄັນ ດັ່ງນີ້:

1. ຮັບຮອງເອົາກົດລະບຽບຂອງວິສາຫະກິດ;

2. ຮັບຮອງເອົາແຜນດຳເນີນທຸລະກິດ ສາມປີ ທຳອິດ;
3. ຕົກລົງ ກ່ຽວກັບຮຸ້ນສາມັນ ແລະ/ຫຼື ຮຸ້ນບຸລິມະສິດ;
4. ຮັບຮອງການແຕ່ງຕັ້ງ ສະພາບໍລິຫານ, ຄະນະຜູ້ອຳນວຍການຂອງວິສາຫະກິດປະສົມ;
5. ພິຈາລະນາບັນຫາອື່ນ.

**ມາດຕາ 58 ຜູ້ຕາງໜ້າຜູ້ຖືຮຸ້ນຝ່າຍລັດ**

ຜູ້ຕາງໜ້າຜູ້ຖືຮຸ້ນຝ່າຍລັດ ແມ່ນ ພະນັກງານ-ລັດຖະກອນ ຈາກກະຊວງການເງິນ ຫຼື ກະຊວງ, ອົງການທີ່ກ່ຽວຂ້ອງ ຊຶ່ງໄດ້ຮັບການແຕ່ງຕັ້ງຈາກລັດຖະມົນຕີກະຊວງການເງິນ.

ຜູ້ຕາງໜ້າຜູ້ຖືຮຸ້ນຝ່າຍລັດ ມີຄວາມຮັບຜິດຊອບ ໃນການເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ດ້ວຍຕົນເອງ ຫຼື ມອບໃຫ້ຜູ້ຕາງໜ້າ ເຂົ້າຮ່ວມແທນໃນກໍລະນີຈຳເປັນ. ກ່ອນພິຈາລະນາຕົກລົງບັນຫາສຳຄັນ ໃນກອງປະຊຸມຜູ້ຖືຮຸ້ນ ເປັນຕົ້ນ ການເພີ່ມ ຫຼື ຫຼຸດທຶນ, ການຄວບ, ການສ້າງຕັ້ງ ຫຼື ຍຸບເລີກສ້າງສາຂາ, ການຂາຍ, ການໂອນຮຸ້ນ, ກິດຈະການຂອງວິສາຫະກິດປະສົມ, ການແບ່ງປັນເງິນປັນຜົນ ຜູ້ຕາງໜ້າຜູ້ຖືຮຸ້ນນັ້ນ ຕ້ອງໄດ້ຂໍຄຳເຫັນນຳກະຊວງການເງິນກ່ອນ.

**ມາດຕາ 59 ການຊື້ຮຸ້ນຂອງວິສາຫະກິດພາກສ່ວນອື່ນ**

ລັດ ຫຼື ລັດວິສາຫະກິດ ສາມາດຊື້ຮຸ້ນຂອງວິສາຫະກິດພາກສ່ວນອື່ນ ໃນອັດຕາສ່ວນທຶນ ໜ້ອຍ ຫຼື ຫຼາຍ ຕາມການຕົກລົງຂອງລັດຖະບານ ບົນພື້ນຖານການສະເໜີຂອງກະຊວງການເງິນ. ວິສາຫະກິດພາກສ່ວນອື່ນ ທີ່ລັດຈະຊື້ຮຸ້ນນັ້ນ ຕ້ອງເປັນວິສາຫະກິດ ທີ່ມີປະສິດທິພາບສູງ ແລະ ມີຄວາມສຳຄັນທາງເສດຖະກິດ-ສັງຄົມ.

ພາຍຫຼັງລັດຖະບານຕົກລົງເຫັນດີແລ້ວ ໃຫ້ກະຊວງການເງິນ ປະສານສົມທົບກັບກະຊວງ, ອົງການທີ່ກ່ຽວຂ້ອງ ແຕ່ງຕັ້ງຄະນະກຳມະການຄົ້ນຄວ້າ ແລະ ເຈລະຈາການຊື້ຮຸ້ນຂອງວິສາຫະກິດນັ້ນ.

**ມາດຕາ 60 ໂຄງປະກອບການຈັດຕັ້ງ, ການຄຸ້ມຄອງ ແລະ ການເຄື່ອນໄຫວຂອງວິສາຫະກິດປະສົມ**

ໂຄງປະກອບການຈັດຕັ້ງ, ການຄຸ້ມຄອງ ແລະ ການເຄື່ອນໄຫວຂອງວິສາຫະກິດປະສົມ ລວມທັງການຕິດຕາມ ກວດກາ ແລະ ການລາຍງານ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍວິສາຫະກິດ, ກົດໝາຍທີ່ກ່ຽວຂ້ອງ ແລະ ຕາມສັນຍາຮ່ວມທຶນ.

## ພາກທີ V
## ການຄຸ້ມຄອງ ແລະ ກວດກາວິສາຫະກິດລັດລົງທຶນ

**ມາດຕາ 61 ອົງການຄຸ້ມຄອງ ແລະ ກວດກາວິສາຫະກິດລັດລົງທຶນ**

ກະຊວງການເງິນ ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ກວດກາວິສາຫະກິດລັດລົງທຶນ.

ອົງການຄຸ້ມຄອງ ແລະ ກວດກາວິສາຫະກິດລັດລົງທຶນ ປະກອບດ້ວຍ:

1. ກະຊວງການເງິນ;
2. ພະແນກການເງິນແຂວງ, ນະຄອນຫຼວງ;
3. ກະຊວງ, ອົງການທີ່ວິສາຫະກິດລັດລົງທຶນຂຶ້ນກັບ.

**ມາດຕາ 62 ສິດ ແລະ ໜ້າທີ່ຂອງກະຊວງການເງິນ**

ໃນການຄຸ້ມຄອງວິສາຫະກິດລັດລົງທຶນ ກະຊວງການເງິນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ, ປັບປຸງ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ນິຕິກຳ ກ່ຽວກັບວິສາຫະກິດລັດລົງທຶນ ເພື່ອສະເໜີລັດຖະບານ ພິຈາລະນາ;
2. ໂຄສະນາ, ເຜີຍແຜ່ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ນິຕິກຳ ກ່ຽວກັບວິສາຫະກິດລັດລົງທຶນ;

3. ຄົ້ນຄວ້າການສ້າງຕັ້ງວິສາຫະກິດລັດລົງທຶນ ໃນຂອບເຂດທົ່ວປະເທດ;

4. ທວງໃຫ້ກະຊວງ, ອົງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ສະໜອງຂໍ້ມູນ ແລະ ເອກະສານເພີ່ມເຕີມ ກ່ຽວກັບການສະເໜີຂໍສ້າງຕັ້ງວິສາຫະກິດລັດລົງທຶນ;

5. ອະນຸຍາດໃຫ້ລັດວິສາຫະກິດສ້າງຕັ້ງສາຂາ;

6. ຄົ້ນຄວ້າ ກ່ຽວກັບການປັບປຸງໂຄງສ້າງ, ການຄວບ, ຍຸບເລີກ ແລະ ການຫັນ ລັດວິສາຫະກິດໄປສູ່ຮູບແບບອື່ນ ເພື່ອສະເໜີລັດຖະບານ ພິຈາລະນາຕົກລົງ;

7. ຄົ້ນຄວ້າ, ຊອກຫາແຫຼ່ງທຶນ ເພື່ອປະກອບທຶນສ້າງຕັ້ງ, ທຶນເພື່ອຊື້ຮຸ້ນນຳວິສາຫະກິດພາກສ່ວນອື່ນ ແລະ ການເພີ່ມທຶນໃຫ້ບັນດາວິສາຫະກິດລັດລົງທຶນ;

8. ແຕ່ງຕັ້ງ ຄະນະກຳມະການສ້າງຕັ້ງ, ຄະນະກຳມະການປັບປຸງໂຄງສ້າງ, ຄະນະກຳມະການຫັນລັດວິສາຫະກິດ ແລະ ຄະນະກຳມະການຄົ້ນຄວ້າການຮ່ວມທຶນ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ຕິດຕາມກວດກາ ການເຄື່ອນໄຫວຂອງຄະນະດັ່ງກ່າວ;

9. ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຜູ້ຕາງໜ້າຜູ້ຖືຮຸ້ນ, ສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການຝ່າຍລັດ ແລະ ຕິດຕາມ ກວດກາການເຄື່ອນໄຫວຂອງບຸກຄົນດັ່ງກ່າວ;

10. ແຕ່ງຕັ້ງບຸກຄະລາກອນຈາກກະຊວງການເງິນ, ກະຊວງ, ອົງການທີ່ວິສາຫະກິດລັດລົງທຶນຂຶ້ນກັບ ແລະ ວິສາຫະກິດລັດລົງທຶນ ເພື່ອປະກອບເຂົ້າເປັນກອງເລຂາຂອງກອງປະຊຸມຜູ້ຖືຮຸ້ນ ຫຼື ສະພາບໍລິຫານ;

11. ຄຸ້ມຄອງ, ຕິດຕາມ ກວດກາ, ກວດສອບ, ປະເມີນຜົນ ແລະ ຈັດປະເພດ ກ່ຽວກັບການດຳເນີນທຸລະກິດຂອງວິສາຫະກິດລັດລົງທຶນ ແລະ ໄລ່ລຽງເງິນປັນຜົນປະຈຳປີ;

12. ເຊັນສັນຍາຮ່ວມທຶນກັບຜູ້ຮ່ວມທຶນ;

13. ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ລັດວິສາຫະກິດ ສາມາດເຂົ້າເຖິງແຫຼ່ງທຶນ;

14. ຄຸ້ມຄອງ ແລະ ຕິດຕາມ ກວດກາການນຳໃຊ້ເງິນກູ້ຂອງວິສາຫະກິດລັດລົງທຶນ ໃຫ້ຖືກຕ້ອງຕາມເປົ້າໝາຍ;

15. ຄຸ້ມຄອງ, ຕິດຕາມ ການເພີ່ມ ຫຼື ຫຼຸດທຶນ, ປະເມີນມູນຄ່າ, ສະສາງ ແລະ ຊື້ໃໝ່ ຊັບສິນຂອງລັດວິສາຫະກິດ;

16. ສະເໜີພາກສ່ວນທີ່ກ່ຽວຂ້ອງ ໂຈະ, ປ່ຽນແປງ ຫຼື ຖອນໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດ ໃນກໍລະນີບໍ່ປະຕິບັດຕາມສັນຍາຮ່ວມທຶນ, ພັນທະດ້ານພາສີ, ອາກອນ ແລະ ພັນທະດ້ານການເງິນອື່ນ ຕາມກົດໝາຍ ແລະ ລະບຽບການ;

17. ປະສານສົມທົບກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມ ກວດກາວິສາຫະກິດລັດລົງທຶນ;

18. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

19. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 63 ສິດ ແລະ ໜ້າທີ່ຂອງພະແນກການເງິນແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວິສາຫະກິດລັດລົງທຶນ ພະແນກການເງິນແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ນິຕິກຳ ກ່ຽວກັບວິສາຫະກິດລັດລົງທຶນ;

2. ໂຄສະນາ, ເຜີຍແຜ່ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ນິຕິກຳ ກ່ຽວກັບວິສາຫະກິດລັດລົງທຶນ;

3. ຄຸ້ມຄອງ, ຕິດຕາມ ກວດກາການເຄື່ອນໄຫວຂອງລັດວິສາຫະກິດ ຕາມການມອບໝາຍ;

4. ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ລັດວິສາຫະກິດ ສາມາດເຂົ້າເຖິງແຫຼ່ງທຶນ;

5. ສະເໜີກະຊວງການເງິນ ຫຼື ພາກສ່ວນທີ່ກ່ຽວຂ້ອງ ໂຈະ, ປ່ຽນແປງ ຫຼື ຖອນໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດ ໃນກໍລະນີບໍ່ປະຕິບັດຕາມສັນຍາຮ່ວມທຶນ, ພັນທະດ້ານພາສີ, ອາກອນ ແລະ ພັນທະດ້ານການເງິນອື່ນ ຕາມກົດໝາຍ ແລະ ລະບຽບການ;

6. ປະສານສົມທົບກັບພະແນກການ, ອົງການປົກຄອງຂັ້ນເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາວິສາຫະກິດລັດລົງທຶນ;

7. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ໃຫ້ກະຊວງການເງິນ, ອົງການປົກຄອງແຂວງ ນະຄອນຫຼວງ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 64 ສິດ ແລະ ໜ້າທີ່ຂອງກະຊວງ, ອົງການທີ່ວິສາຫະກິດລັດລົງທຶນຂຶ້ນກັບ

ກະຊວງ, ອົງການທີ່ວິສາຫະກິດລັດລົງທຶນຂຶ້ນກັບ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ນິຕິກຳ ກ່ຽວກັບວິສາຫະກິດລັດລົງທຶນ;

2. ຄັດເລືອກ ແລະ ສະເໜີກະຊວງການເງິນ ພິຈາລະນາແຕ່ງຕັ້ງ ສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການຝ່າຍລັດ;

3. ຄຸ້ມຄອງ ແລະ ຕິດຕາມ ກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

4. ຕິດຕາມ ກວດກາການເຄື່ອນໄຫວທຸລະກິດຂອງວິສາຫະກິດລັດລົງທຶນ;

5. ຄັດເລືອກບຸກຄະລາກອນ ເພື່ອສະເໜີກະຊວງການເງິນ ແຕ່ງຕັ້ງເຂົ້າຮ່ວມໃນຄະນະກຳມະການຫັນລັດວິສາຫະກິດ, ຄະນະປັບປຸງລັດວິສາຫະກິດ;

6. ຄົ້ນຄວ້າເລືອກເຟັ້ນ ເພື່ອກຳນົດເປັນລັດວິສາຫະກິດຍຸດທະສາດຂອງຂະແໜງການຕົນ;

7. ປະສານສົມທົບກັບກະຊວງການເງິນ ໃນການດຳເນີນວຽກງານປະຕິຮູບ ຫຼື ປັບໂຄງສ້າງລັດວິສາຫະກິດທີ່ຂຶ້ນກັບການຄຸ້ມຄອງຂອງຕົນ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 65 ສິດ ແລະ ໜ້າທີ່ຂອງກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ໃນການຊຸກຍູ້, ສົ່ງເສີມ, ຄຸ້ມຄອງ ແລະ ຕິດຕາມ ກວດກາວິສາຫະກິດລັດລົງທຶນ ພ້ອມທັງໃຫ້ຮ່ວມມືກັບອົງການຄຸ້ມຄອງວິສາຫະກິດລັດລົງທຶນ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ.

### ມາດຕາ 66 ເນື້ອໃນການກວດກາ

ການກວດກາວິສາຫະກິດລັດລົງທຶນ ມີ ເນື້ອໃນ ດັ່ງນີ້:

1. ການປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວິສາຫະກິດລັດລົງທຶນ;

2. ການເຄື່ອນໄຫວຂອງວິສາຫະກິດລັດລົງທຶນ;

3. ການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງພະນັກງານ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ກັບວິສາຫະກິດລັດລົງທຶນ.

### ມາດຕາ 67 ຮູບການການກວດກາ

ການກວດກາວິສາຫະກິດລັດລົງທຶນ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປ ຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;

2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍມີການແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ ຢ່າງໜ້ອຍ ຊາວສີ່ ຊົ່ວໂມງ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ.

ການກວດກາ ໃຫ້ດຳເນີນການກວດກາທາງດ້ານເອກະສານ ແລະ ລົງກວດກາຕົວຈິງຢູ່ສະຖານທີ່ກ່ຽວຂ້ອງ. ການກວດກາ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ.

## ພາກທີ VI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 68 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ເປັນຕົ້ນ ການດຳເນີນທຸລະກິດ ຢ່າງມີປະສິດທິຜົນ, ມີຜົນກຳໄລ, ການຍົກສູງຄວາມສາມາດໃນການແຂ່ງຂັນຕາມກົນໄກຕະຫຼາດ ແລະ ສ້າງຜົນປະໂຫຍດໃຫ້ແກ່ລັດ ແລະ ສັງຄົມ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 69 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດດຳລັດສະບັບນີ້ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີ ເບົາ ຫຼື ໜັກ.

## ພາກທີ VII
## ບົດບັນຍັດສຸດທ້າຍ

**ມາດຕາ 70 ການຈັດຕັ້ງປະຕິບັດ**

ກະຊວງການເງິນ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດລັດລົງທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 71 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ພາຍຫຼັງ ນາຍົກລັດຖະມົນ ລົງລາຍເຊັນ, ໄດ້ລົງຈົດໝາຍເຫດທາງລັດຖະການ ແລະ ໃຫ້ມີຜົນຈັດຕັ້ງປະຕິບັດ ໃນວັນທີ 1 ຕຸລາ 2022 ເປັນຕົ້ນໄປ.

ວິສາຫະກິດລັດລົງທຶນ ທີ່ໄດ້ຮັບການສ້າງຕັ້ງ ແລະ ດຳເນີນທຸລະກິດ ກ່ອນດຳລັດສະບັບນີ້ ຕ້ອງປັບປຸງເງື່ອນໄຂ, ໂຄງປະກອບການຈັດຕັ້ງ ແລະ ການເຄື່ອນໄຫວຂອງຕົນ ໃຫ້ສອດຄ່ອງກັບດຳລັດສະບັບນີ້ ພາຍໃນເວລາ ໜຶ່ງປີ ນັບແຕ່ວັນດຳລັດສະບັບນີ້ ມີຜົນສັກສິດ.

**ຕາງໜ້າລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

ພັນຄຳ ວິພາວັນ